ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                        ເລກທີ        /ສພຊ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ)

# ກົດໝາຍ ວ່າດ້ວຍ ງົບປະມານແຫ່ງລັດ

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບ ວຽກງານງົບປະມານແຫ່ງລັດ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງການຈັດເກັບລາຍຮັບ ເຂົ້າງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ; ປະຕິບັດລາຍຈ່າຍງົບປະມານ ໃຫ້ໂປ່ງໃສ, ສາມາດກວດສອບໄດ້ ແລະ ເອກະພາບໃນຂອບເຂດທົ່ວປະເທດ; ຍົກສູງຄວາມຮັບຜິດຊອບຂອງອົງການລັດທຸກຂັ້ນ, ເພີ່ມຖານລາຍຮັບ, ສ້າງຄວາມເຂັ້ມແຂງທາງດ້ານການເງິນດ້ວຍຕົນເອງເທື່ອລະກ້າວ ເຮັດໃຫ້ການເງິນແຫ່ງຊາດ ມີສະຖຽນລະພາບ ແລະ ເຊື່ອມໂຍງເຂົ້າລະບົບການເງິນສາກົນ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຕໍ່ເນື່ອງ ແລະ ຍືນຍົງ.

### ມາດຕາ 2 (ປັບປຸງ) ງົບປະມານແຫ່ງລັດ

ງົບປະມານແຫ່ງລັດ ແມ່ນ ການຄາດຄະເນແຜນລາຍຮັບ-ລາຍຈ່າຍຂອງລັດ ຊຶ່ງໄດ້ຮັບຮອງຈາກ ສະພາແຫ່ງຊາດ ໃນແຕ່ລະປີ, ມີບົດບາດເປັນໃຈກາງຂອງລະບົບການເງິນແຫ່ງລັດ, ເປັນເຄື່ອງມືຄຸ້ມຄອງ, ດັດສົມເສດຖະກິດມະຫາພາກ ເພື່ອຮັບປະກັນໃຫ້ເສດຖະກິດ-ສັງຄົມແຫ່ງຊາດ ມີການພັດທະນາ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. ວຽກງານງົບປະມານແຫ່ງລັດ ໝາຍເຖິງ ການຄຸ້ມຄອງລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ;

2. ການຊ່ວຍໜູນເພື່ອດຸນດ່ຽງງົບປະມານແຫ່ງລັດ ໝາຍເຖິງ ການດຸນດ່ຽງຊ່ວຍໜູນຈາກງົບປະມານແຫ່ງລັດ ລະຫວ່າງ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ທີ່ນອນໃນແຜນງົບປະມານແຫ່ງລັດ_ປະຈຳປີ;

2. ການຊ່ວຍໜູນງົບປະມານແຫ່ງລັດ ທີ່ມີເປົ້າໝາຍສະເພາະ ໝາຍເຖິງ ການຊ່ວຍໜູນງົບປະມານແຫ່ງລັດ_ຈາກ ສູນກາງ ໃຫ້ທ້ອງຖິ່ນ ເພື່ອປະຕິບັດແຜນງານ, ໂຄງການລະດັບຊາດ ທີ່ປະຕິບັດຢູ່ທ້ອງຖິ່ນ ເປັນຕົ້ນ_ແກ້ໄຂຜົນ ກະທົບຈາກໄພພິບັດ, ພະຍາດລະບາດຮຸນແຮງ, ການຜະລິດເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ ແລະ ອື່ນໆ;

3. ແຜນງົບປະມານແຫ່ງລັດ ຫ້າປີ ໝາຍເຖິງ ການກຳນົດນະໂຍບາຍການເງິນແຫ່ງລັດ ແລະ ການຄາດຄະເນຕົວ ເລກ ລາຍຮັບ, ລາຍຈ່າຍ ແລະ ການດຸນດ່ຽງງົບປະມານແຫ່ງລັດໄລຍະ ຫ້າປີ;

4. ແຜນງົບປະມານແຫ່ງລັດ ປະຈຳປີ ໝາຍເຖິງ ການຄາດຄະເນແຜນງົບປະມານແຫ່ງລັດ ໃນໄລຍະ ໜຶ່ງປີ;

5. ແຜນງົບປະມານແຫ່ງລັດ ໄລຍະກາງ ໝາຍເຖິງ ການຄາດຄະເນແຜນງົບປະມານແຫ່ງລັດ ໃນໄລຍະ ສາມປີ ທີ່ ກຳນົດແຜນລະອຽດໜຶ່ງປີ ແລະ ກຳນົດຂອບງົບປະມານ ສອງປີ ຖັດໄປ;

6. ຫົວໜ່ວຍນຳໃຊ້ງົບປະມານແຫ່ງລັດ ໝາຍເຖິງ ການຈັດຕັ້ງທີ່ນຳໃຊ້ງົບປະມານໂດຍກົງ ຊຶ່ງໄດ້ຮັບງົບປະມານ ຈາກ ຫົວໜ່ວຍງົບປະມານຂັ້ນໜຶ່ງ ຫຼື ຫົວໜ່ວຍງົບປະມານຂັ້ນສອງ;

7. ຫົວໜ່ວຍງົບປະມານແຫ່ງລັດ ໝາຍເຖິງ ອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບ ເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ຮັບມອບສິດຈາກລັດຖະບານ ໃນການ ສ້າງແຜນ, ການຈັດຕັ້ງປະຕິບັດ ແລະ ການສະຫຼຸບງົບປະມານແຫ່ງລັດ;

8. ຫົວໜ່ວຍບໍລິຫານວິຊາການ ໝາຍເຖິງ ຫົວໜ່ວຍງົບປະມານແຫ່ງລັດ ຂັ້ນໜຶ່ງ ຫຼື ຂັ້ນສອງ ທີ່ຂຶ້ນກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນຫົວໜ່ວຍບໍລິຫານ ແລະ ຫົວໜ່ວຍວິຊາການ ເຮັດໜ້າທີ່ເກັບ ລາຍຮັບ ຫຼື ບໍ່ມີລາຍຮັບ ຈາກການເກັບຄ່າທຳນຽມ, ຄ່າບໍລິການຕ່າງໆ;

9. ຫົວໜ່ວຍວິຊາການເປັນເຈົ້າຕົນເອງ ໝາຍເຖິງ ຫົວໜ່ວຍງົບປະມານແຫ່ງລັດ ຂັ້ນໜຶ່ງ ຫຼື ຂັ້ນສອງ ທີ່ມີລາຍຮັບ ຄ່າບໍລິການທາງດ້ານວິຊາການທີ່ພຽງພໍກັບບາງພາກລາຍຈ່າຍ ຫຼື ລາຍຈ່າຍຂອງຕົນທັງໝົດ;

10. ຜູ້ສັ່ງການເອກ ໝາຍເຖິງ ລັດຖະມົນຕີກະຊວງການເງິນ ທີ່ໄດ້ຮັບມອບສິດຈາກລັດຖະບານ ໃນການຄຸ້ມຄອງ ບໍລິຫານ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ;

11. ຜູ້ສັ່ງການ ໝາຍເຖິງ ລັດຖະມົນຕີ, ຫົວໜ້າອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບ ເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຫຼື ຜູ້ໄດ້ຮັບມອບ ສິດ ໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໃນຂະແໜງການຂອງຕົນ;

12. ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ ໝາຍເຖິງ ຮ່ວງເງິນທີ່ກຳນົດໃນແຜນລາຍຈ່າຍງົບປະມານແຫ່ງລັດ ປະຈຳປີ ເພື່ອນຳໃຊ້ເຂົ້າໃນຄວາມຕ້ອງການບັງເອີນ, ຮີບດ່ວນ ແລະ ເຫດສຸດວິໄສ ເປັນຕົ້ນ ວຽກງານປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບ, ໄພພິບັດ, ພະຍາດລະບາດ;

13. ລາຍຮັບຈາກການລົງທຶນທາງດ້ານການເງິນ ໝາຍເຖິງ ດອກເບ້ຍ ເງິນຝາກ, ພັນທະບັດ ແລະ ການໃຫ້ກູ້ຢືມຕໍ່ ທີ່ໄດ້ຈາກການນຳໃຊ້ເງິນງົບປະມານແຫ່ງລັດ;
14. ກຳນົດໝາຍການຈັດສັນງົບປະມານແຫ່ງລັດ ໝາຍເຖິງ ການກຳນົດວົງເງິນ ທີ່ຈະຈັດສັນໃຫ້ ຂະແໜງການ ແລະ ທ້ອງຖິ່ນ ໂດຍອີງຕາມລັກສະນະ, ຄວາມຮັບຜິດຊອບ, ຈຸດພິເສດ, ທີ່ຕັ້ງພູມສາດ, ຈຳນວນພົນ, ເນື້ອທີ່ ແລະ ຄວາມຮຽກຮ້ອງຕ້ອງການໃນການພັດທະນາ;
15. ພະນັກງານການເງິນ ໝາຍເຖິງ ພະນັກງານຂອງຂະແໜງການ ການເງິນ ແລະ ຂະແໜງການອື່ນ ທີ່ຮັບຜິດຊອບ ວຽກງານການເງິນ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ວຽກງານ ງົບປະມານແຫ່ງລັດ

ລັດ ວາງນະໂຍບາຍກ່ຽວກັບວຽກງານງົບປະມານແຫ່ງລັດ ດ້ວຍການຂຸດຄົ້ນຄວາມອາດສາມາດບົ່ມຊ້ອນຂອງແຫຼ່ງລາຍຮັບພາຍໃນ, ຮັບປະກັນລາຍຈ່າຍ ແລະ ມີສ່ວນສະສົມແຮໄວ້, ປະຕິບັດການຮ່ວມມືກັບຕ່າງປະເທດ ຢ່າງເປັນເຈົ້າການ ເພື່ອຮັກສາສະຖຽນລະພາບທາງດ້ານການເງິນຂອງປະເທດ, ປະຕິບັດລາຍຈ່າຍເຂົ້າໃນການ ພັດທະນາເສດຖະກິດ-ສັງຄົມຢ່າງມີປະສິດທິຜົນ ເປັນຕົ້ນ ການພັດທະນາຊັບພະຍາກອນມະນຸດ, ການບໍລິຫານ ຂອງກົງຈັກລັດ, ການກໍ່ສ້າງພື້ນຖານໂຄງລ່າງ, ການຄົ້ນຄວ້າວິທະຍາສາດ, ການນຳໃຊ້ ແລະ ພັດທະນາເຕັກໂນໂລຊີ ເພື່ອສົ່ງເສີມການຜະລິດເປັນສິນຄ້າ, ການບໍລິການຕອບສະໜອງການຊົມໃຊ້ພາຍໃນ ແລະ ການສົ່ງອອກ, ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ລຶບລ້າງຄວາມທຸກຍາກ, ຮັບປະກັນການຄຸ້ມຄອງງົບປະມານແຫ່ງລັດ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ ແນໃສ່ເຮັດໃຫ້ປະເທດຊາດ ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງເທື່ອລະກ້າວ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

### ມາດຕາ 5 (ປັບປຸງ) ພັນທະຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕໍ່ງົບປະມານແຫ່ງລັດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງປະຕິບັດພັນທະ ໃນການເສຍ ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ມອບເຂົ້າງົບປະມານແຫ່ງລັດ ແລະ ມີພັນທະປະກອບສ່ວນ, ໃຫ້ການຮ່ວມມື ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

### ມາດຕາ 6 (ປັບປຸງ) ຫຼັກການ ກ່ຽວກັບ ວຽກງານງົບປະມານແຫ່ງລັດ

ວຽກງານງົບປະມານແຫ່ງລັດ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ການລວມສູນເປັນເອກະພາບ ແລະ ຄົບຖ້ວນ: ທຸກແຫຼ່ງລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ ຕ້ອງໄດ້ລວມສູນເປັນເອກະພາບ ແລະ ຄົບຖ້ວນ ດ້ວຍການຈົດຜ່ານລະບົບບັນຊີລວມສູນຄັງເງິນແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

2. ຄວາມໝັ້ນຄົງຂອງງົບປະມານ: ການສ້າງແຜນງົບປະມານແຫ່ງລັດ ປະຈຳປີ ຕ້ອງເລີ່ມຈາກຄວາມສາມາດຕົວຈິງຂອງເສດຖະກິດແຫ່ງຊາດ ຮັບປະກັນການດຸນດ່ຽງເສດຖະກິດມະຫາພາກ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ; ການສ້າງແຜນ ແລະ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ຕ້ອງເປັນສະກຸນເງິນກີບ;

3. ຄວາມເປັນເອກະພາບ: ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີຕ້ອງໃຫ້ຖືກຕ້ອງ ຕາມແຜນການທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ, ບໍ່ອະນຸຍາດໃຫ້ຈ່າຍນອກແຜນ, ລົງທຶນກ່ອນ ແລະ ຈ່າຍເກີນແຜນງົບປະມານ;

4. ການຂາດດຸນງົບປະມານແຫ່ງລັດ: ການຂາດດຸນ ໃຫ້ຂາດດຸນສະເພາະງົບປະມານແຫ່ງລັດຂັ້ນສູນກາງ ໃນຮ່ອງລາຍຈ່າຍລົງທຶນ ເພື່ອການພັດທະນາເທົ່ານັ້ນ ໂດຍນຳໃຊ້ແຫຼ່ງກູ້ຢືມພາຍໃນເປັນຫຼັກ ແລະ ແຫຼ່ງກູ້ຢືມພາຍນອກຮູບແບບເງື່ອນໄຂຜ່ອນຜັນ ຊຶ່ງບໍ່ລວມການໃຫ້ກູ້ຢືມຕໍ່ຂອງລັດຖະບານ. ສຳລັບ ງົບປະມານທ້ອງຖິ່ນ ທີ່ຂາດດຸນ ຈະໄດ້ຮັບການດຸນດ່ຽງຈາກງົບປະມານແຫ່ງລັດຂັ້ນສູນກາງ ຕາມແຜນງົບປະມານປະຈຳປີ ທີ່ສະພາແຫ່ງຊາດຮັບຮອງ;

5. ການດຸນດ່ຽງງົບປະມານແຫ່ງລັດ: ການດຸນດ່ຽງງົບປະມານແຫ່ງລັດ ໄດ້ມາຈາກການກູ້ຢືມ ພາຍໃນ, ຕ່າງປະເທດ ແລະ ແຫຼ່ງທຶນອື່ນ;

6. ປະສິດທິຜົນ ແລະ ຄວາມສາມາດກວດສອບໄດ້: ຂໍ້ມູນງົບປະມານແຫ່ງລັດ ກ່ຽວກັບ ການສ້າງແຜນ, ການຈັດຕັ້ງປະຕິບັດ ແລະ ການສະຫຼຸບ ຕ້ອງຮັບປະກັນຄວາມຊັດເຈນ, ໂປ່ງໃສ, ເປີດເຜີຍ ແລະ ຕ້ອງໄດ້ຜ່ານການກວດກາ, ກວດການ ຢ່າງເຂັ້ມງວດ  ແລະ ຍັ້ງຢືນ ຈາກອົງການກວດສອບແຫ່ງລັດ;

7. ການແບ່ງຄວາມຮັບຜິດຊອບ ກ່ຽວກັບ ລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ: ການຮັບປະກັນຫຼັກການລວມສູນປະຊາທິປະໄຕ, ການປະຕິບັດກົດໝາຍ ແລະ ລະບຽບການຕ້ອງໃຫ້ເຂັ້ມງວດ ແລະ ເປັນເອກະພາບ; ງົບປະມານສູນກາງ ຄຸ້ມຄອງແຫຼ່ງລາຍຮັບສ່ວນໃຫຍ່ ເພື່ອປະຕິບັດລາຍຈ່າຍທີ່ມີຄວາມສຳຄັນລະດັບຊາດ ແລະ ຊ່ວຍຫນູນໃຫ້ທ້ອງຖິ່ນ ທີ່ຍັງປະສົບກັບຄວາມຫຍຸ້ງຍາກ ບໍ່ສາມາດຕອບສະໜອງໄດ້ຢ່າງພຽງພໍ ຕາມສະພາບຄວາມເປັນຈິງ;

8. ການຄຸ້ມຄອງລວມສູນຕາມສາຍຕັ້ງ ຂອງຂະແໜງການອື່ນ: ຫົວໜ່ວຍງົບປະມານຕາມສາຍຕັ້ງ ຄຸ້ມຄອງລວມສູນທາງດ້ານງົບປະມານແຫ່ງລັດ ແຕ່ຂັ້ນສູນກາງ ລົງຮອດ ທ້ອງຖິ່ນ.

9. ການຄຸ້ມຄອງລວມສູນຕາມສາຍຕັ້ງ ຂອງຂະແໜງການເງິນ: ວຽກງານວິຊາສະເພາະ, ວຽກງານຄຸ້ມຄອງກົງຈັກ ແລະ ງົບປະມານ ຂອງຂະແໜງພາສີ, ຂະແໜງສ່ວຍສາອາກອນ ແລະ ຄັງເງິນແຫ່ງລັດ ຕ້ອງຄຸ້ມຄອງລວມສູນຕາມສາຍຕັ້ງ.

10. ການຈັດສັນງົບປະມານແຫ່ງລັດ: ການຈັດສັນງົບປະມານແຫ່ງລັດ  ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຕ້ອງປະຕິບັດຕາມແຜນງົບປະມານແຫ່ງລັດ ຫ້າປີ, ແຜນງົບປະມານໄລຍະກາງ, ປະຈຳປີ ແລະ ກຳນົດໝາຍການຈັດສັນງົບປະມານແຫ່ງລັດ ທີ່ ສະພາແຫ່ງຊາດ ຮັບຮອງ;

11. ຄວາມຮັບຜິດຊອບ: ການຈັດຕັ້ງຂອງລັດ ທີ່ມີການພົວພັນກັບງົບປະມານແຫ່ງລັດ ຕ້ອງມີຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ;
12. ຄວາມສະເໝີພາບບົດບາດຍິງ-ຊາຍ: ການສ້າງ ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຕ້ອງຮັບປະກັນຄວາມສະເໝີພາບບົດບາດຍິງ-ຊາຍ.

ມາດຕາ 7 ປີງົບປະມານແຫ່ງລັດ

ປີງົບປະມານແຫ່ງລັດ ລວມມີ ສິບສອງ ເດືອນ, ເລີ່ມແຕ່ວັນທີ 01 ມັງກອນ ແລະ ສິ້ນສຸດລົງ ໃນວັນທີ 31 ທັນວາ ຂອງປີດຽວກັນ.

ມາດຕາ 8 (ໃໝ່) ກອງທຶນຂອງລັດ

ກອງທຶນຂອງລັດ ແມ່ນການຈັດຕັ້ງໜຶ່ງ ທີ່ລັດຖະບານອະນຸຍາດໃຫ້ສ້າງຕັ້ງຂຶ້ນ ຊຶ່ງແບ່ງອອກເປັນ ກອງທຶນທີ່ນຳໃຊ້ງົບປະມານຂອງລັດ ແລະ ກອງທຶນທີ່ເປັນເອກະລາດດ້ານງົບປະມານ ເພື່ອປະຕິບັດງົບປະມານສະເພາະເປົ້າໝາຍໃດໜຶ່ງ ຫຼື ສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມ ຕາມລະບຽບການ ບົນພື້ນຖານຮັບປະກັນຄວາມຍືນຍົງທາງດ້ານການເງິນ.

ສຳລັບລາຍລະອຽດ ແລະ ເງື່ອນໄຂ ການສ້າງຕັ້ງກອງທຶນຂອງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 9 (ປັບປຸງ) ການຄຸ້ມຄອງລາຍຮັບ-ລາຍຈ່າຍ ກອງທຶນທີ່ນຳໃຊ້ງົບປະມານຂອງລັດ

ລາຍຮັບ-ລາຍຈ່າຍ ກອງທຶນທີ່ນຳໃຊ້ງົບປະມານຂອງລັດ ຕ້ອງມອບໃນແຜນງົບປະມານແຫ່ງລັດປະຈຳປີ, ຈັດຕັ້ງປະຕິບັດຜ່ານລະບົບຄັງເງິນແຫ່ງລັດ ຫຼື ທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດຈາກລັດຖະບານ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍລາຍຈ່າຍ ຕາມລະບຽບການທີ່ລັດຖະບານອະນຸມັດ. ທຸກລາຍຮັບ-ລາຍຈ່າຍ ກອງທຶນທີ່ນຳໃຊ້ງົບປະມານຂອງລັດ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ, ຕິດຕາມ ແລະ ກວດກາຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຂອງຂະແໜງການການເງິນ.

ທຸກແຫຼ່ງລາຍຮັບ-ລາຍຈ່າຍ ກອງທຶນທີ່ນຳໃຊ້ງົບປະມານຂອງລັດ ຕ້ອງສັງລວມເປັນເອກະສານຊ້ອນທ້າຍຄັດຕິດກັບແຜນງົບປະມານແຫ່ງລັດ ປະຈຳປີ ແລະ ໃນໄລຍະການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ຕ້ອງມີການສະຫຼຸບລາຍຮັບ-ລາຍຈ່າຍ ປະຈຳເດືອນ, ງວດ, ປີ ແລະ ບົດສະຫຼຸບຂາດຕົວ ຢ່າງເປັນປົກກະຕິ ໃຫ້ກະຊວງການເງິນ ແລະ ອົງການກວດສອບແຫ່ງລັດ.

ສ່ວນຍອດເຫຼືອລາຍຮັບຂອງກອງທຶນດັ່ງກ່າວ ພາຍຫຼັງທີ່ມີການໄລ່ລຽງຂາດຕົວປະຈຳປີໃຫ້ຍົກຍອດເຂົ້າໄວ້ໃນບັນຊີກອງທຶນ ຫຼື ມອບເຂົ້າງົບປະມານແຫ່ງລັດໃນປີຖັດໄປ ຕາມລະບຽບການທີ່ກ່ຽວຂ້ອງ.

ມາດຕາ 10 (ໃໝ່) ການຄຸ້ມຄອງລາຍຮັບ-ລາຍຈ່າຍ ກອງທຶນທີ່ເປັນເອກະລາດດ້ານງົບປະມານ

ລາຍຮັບ-ລາຍຈ່າຍ ກອງທຶນທີ່ເປັນເອກະລາດດ້ານງົບປະມານ ມີແຜນງົບປະມານສະເພາະ ທີ່ບໍ່ມອບໃນແຜນງົບປະມານແຫ່ງລັດ ປະຈຳປີ ແຕ່ຕ້ອງຜ່ານການຮັບຮອງຈາກ ສະພາແຫ່ງຊາດ ແລະ ຈັດຕັ້ງປະຕິບັດຜ່ານລະບົບຄັງເງິນ

ແຫ່ງລັດ ຫຼື ທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດຈາກລັດຖະບານ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍລາຍຈ່າຍ ຕາມລະບຽບການທີ່ລັດຖະບານອະນຸມັດ. ທຸກລາຍຮັບ-ລາຍຈ່າຍ ຂອງກອງທຶນທີ່ເປັນເອກະລາດດ້ານງົບປະມານ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ, ຕິດຕາມ ແລະ ກວດກາຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຂະແໜງການການເງິນ.

ທຸກແຫຼ່ງລາຍຮັບ-ລາຍຈ່າຍ ກອງທຶນທີ່ເປັນເອກະລາດດ້ານງົບປະມານ ຕ້ອງສັງລວມເປັນເອກະສານຊ້ອນທ້າຍຄັດຕິດກັບແຜນງົບປະມານແຫ່ງລັດ ປະຈຳປີ ແລະ ໃນໄລຍະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ຕ້ອງມີການສະຫຼຸບລາຍຮັບ-ລາຍຈ່າຍ ປະຈຳເດືອນ, ງວດ, ປີ ແລະ ບົດສະຫຼຸບຂາດຕົວ ຢ່າງເປັນປົກກະຕິ ໃຫ້ກະຊວງການເງິນ ແລະ ອົງການກວດສອບແຫ່ງລັດ.

### ມາດຕາ 11 (ປັບປຸງ) ການແບ່ງຂັ້ນຫົວໜ່ວຍງົບປະມານແຫ່ງລັດ

ຫົວໜ່ວຍງົບປະມານແຫ່ງລັດ ແບ່ງອອກເປັນ ສອງຂັ້ນ ຄື: ຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ແລະ ຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ.

1. ຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ຊຶ່ງແມ່ນ ອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຢູ່ສູນກາງ ແລະ ຂັ້ນແຂວງ ມີຄວາມຮັບຜິດຊອບສັງລວມ, ສ້າງແຜນການເງິນ-ງົບປະມານ ຂອງບັນດາຫົວໜ່ວຍທີ່ຂຶ້ນກັບຕົນ ຕາມການມອບໝາຍຂອງຜູ້ສັ່ງການເອກ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນງົບປະມານຂອງຕົນ;
2. ຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ຊຶ່ງແມ່ນ ການຈັດຕັ້ງຕ່າງໆ ຂັ້ນກົມ, ອົງການລັດທຽບເທົ່າກົມ ຢູ່ສູນກາງ, ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ທີ່ຂຶ້ນກັບຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ມີຄວາມຮັບຜິດຊອບໃນການຄຸ້ມຄອງຈັດຕັ້ງປະຕິບັດແຜນງົບປະມານຂອງຕົນ ຕາມການມອບໝາຍຂອງຜູ້ສັ່ງການ.

### ມາດຕາ 12 (ປັບປຸງ) ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງຫົວໜ່ວຍງົບປະມານບໍລິຫານວິຊາການ

ຫົວໜ່ວຍບໍລິຫານວິຊາການ ທີ່ຂຶ້ນກັບງົບປະມານແຫ່ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ມີລາຍຮັບ ຕ້ອງມອບເຂົ້າເປັນລາຍຮັບງົບປະມານແຫ່ງລັດ ຜ່ານບັນຊີລວມສູນຄັງເງິນແຫ່ງລັດ ຢູ່ທະນາຄານແຫ່ງ ສປປ ລາວ. ລາຍຮັບວິຊາການດັ່ງກ່າວ ຕ້ອງຄິດໄລ່ ແລະ ສັງລວມເຂົ້າໃນແຜນງົບປະມານແຫ່ງລັດ ປະຈຳປີ ຂອງຂະແໜງການ ທີ່ກ່ຽວຂ້ອງ ຕາມລະບຽບການເງິນແຫ່ງລັດ.

ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງຫົວໜ່ວຍບໍລິຫານວິຊາການ ໃຫ້ປະຕິບັດ ດັ່ງນີ້:

1. ການປະຕິບັດລາຍຮັບ ບໍ່ໄດ້ຕາມແຜນ ຕ້ອງຫຼຸດແຜນລາຍຈ່າຍລົງ ຕາມຈຳນວນລາຍຮັບທີ່ເກັບບໍ່ໄດ້ຕາມແຜນ ແຕ່ຕ້ອງໄລ່ລຽງໃຫ້ຖືກຕ້ອງຕາມລະບຽບການ;
2. ການປະຕິບັດ ແລະ ມອບລາຍຮັບເຂົ້າງົບປະມານເກີນແຜນປະຈຳປີ, ສ່ວນທີ່ເກີນແຜນນັ້ນ ໃຫ້ປະຕິບັດຕາມນະໂຍບາຍສົ່ງເສີມການເກັບ ແລະ ນຳໃຊ້ລາຍຮັບງົບປະມານແຫ່ງລັດ ທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້.

ຜ່ານການສະຫຼຸບງົບປະມານຂາດຕົວປະຈຳປີ ຖ້າມີຍອດເຫຼືອເງິນບໍລິຫານວິຊາການ ໃນລະບົບບັນຊີເງິນຝາກຄັງເງິນແຫ່ງລັດ ຕ້ອງມອບເຂົ້າງົບປະມານແຫ່ງລັດ ຕາມລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 13 (ໃໝ່) ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງຫົວໜ່ວຍວິຊາການເປັນເຈົ້າຕົນເອງ

ຫົວໜ່ວຍວິຊາການເປັນເຈົ້າຕົນເອງ ທີ່ຂຶ້ນກັບງົບປະມານແຫ່ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ມີລາຍຮັບວິຊາການ ຕ້ອງມອບເຂົ້າບັນຊີເງິນຝາກໃນລະບົບຄັງເງິນ. ລາຍຮັບ-ລາຍຈ່າຍ ຂອງຫົວໜ່ວຍດັ່ງກ່າວ ຕ້ອງຄິດໄລ່ ແລະ ສັງລວມເຂົ້າໃນແຜນງົບປະມານແຫ່ງລັດ ປະຈຳປີ ຂອງຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການເງິນ.

ການຈັດຕັ້ງປະຕິບັດຂອງຫົວໜ່ວຍດັ່ງກ່າວ ແມ່ນປະຕິບັດຕາມແຜນງົບປະມານປະຈຳປີ ແລະ ສາມາດຈັດຕັ້ງປະຕິບັດວຽກງານຈັດຊື້-ຈັດຈ້າງ ຕາມລະບຽບການ.

ກໍລະນີ ມີຍອດເຫຼືອ ສາມາດຍົກຍອດໄປຈັດຕັ້ງປະຕິບັດໃນປີຕໍ່ໄປ ໂດຍເອົາເຂົ້າແຜນງົບປະມານ ປະຈຳປີ ຕາມລະບຽບການ.

ສຳລັບລາຍລະອຽດ ກ່ຽວກັບ ການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງຫົວໜ່ວຍວິຊາການເປັນເຈົ້າຕົນເອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 14 (ປັບປຸງ) ການນຳເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ

ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ ໄດ້ມາຈາກການຈັດສັນງົບປະມານແຫ່ງລັດ ຕາມຄວາມອາດສາມາດຂອງງົບປະມານແຫ່ງລັດໃນແຕ່ລະປີ.

ເງິນແຮລັດຖະບານ ແມ່ນ ນາຍົກລັດຖະມົນຕີ ເປັນຜູ້ຕົກລົງຈ່າຍ.

ເງິນແຮທ້ອງຖິ່ນ ແມ່ນ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ ແລະ ແຂວງ ເປັນຜູ້ຕົກລົງຈ່າຍ ແລະ ແບ່ງໃຫ້ເມືອງ, ນະຄອນ ຕາມການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ ໃຫ້ນຳໃຊ້ເຂົ້າໃນຄວາມຕ້ອງການບັງເອີນ, ສຸກເສີນ ແລະ ຮີບດ່ວນ ເປັນຕົ້ນ: ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ພະຍາດລະບາດ ແລະ ໄພພິບັດ ຊຶ່ງເງິນແຮດັ່ງກ່າວບໍ່ອະນຸຍາດໃຫ້ນຳໃຊ້ເຂົ້າໃນວຽກງານຟື້ນຟູພື້ນຖານໂຄງລ່າງ.

ໃນກໍລະນີທີ່ເງິນແຮດັ່ງກ່າວ ຫາກບໍ່ຖືກນຳໃຊ້ໃນປີນັ້ນ ຕ້ອງມອບເຂົ້າຄັງສະສົມແຫ່ງລັດ.

## ມາດຕາ 15 (ປັບປຸງ) ການນຳຄັງສະສົມແຫ່ງລັດ

ຄັງສະສົມແຫ່ງລັດ ໄດ້ມາຈາກການສະສົມສະກຸນເງິນຕາ, ວັດຖຸມີຄ່າ, ການຈັດສັນລາຍຈ່າຍແຜນງົບປະມານແຫ່ງລັດປະຈຳປີ ຕາມສະພາແຫ່ງຊາດຮັບຮອງ, ຍອດເຫຼືອ ງົບປະມານປະຈຳປີ, ເງິນແຮລັດຖະບານ, ເງິນແຮທ້ອງຖິ່ນ ແລະ ລາຍຮັບເກີນແຜນງົບປະມານປະຈຳປີ ທີ່ລັດຖະບານຕົກລົງ.

ສະພາແຫ່ງຊາດ ເປັນຜູ້ຕົກລົງໃຫ້ຈ່າຍ ຄັງສະສົມແຫ່ງລັດ ຕາມການສະເໜີຂອງລັດຖະບານ ເພື່ອຊຸກຍູ້ການພັດທະນາ ແລະ ຮັບປະກັນສະຖຽນລະພາບທາງດ້ານເສດຖະກິດຂອງຊາດ. ໃນກໍລະນີທີ່ຈຳເປັນ ຮີບດ່ວນ ແລະ ສຸກເສີນ ນາຍົກລັດຖະມົນຕີ ກໍມີສິດສັ່ງຈ່າຍກ່ອນ ແລ້ວຕ້ອງລາຍງານ ແລະ ສະເໜີຂໍການຮັບຮອງຈາກ ສະພາແຫ່ງຊາດ.

ລັດຖະບານເປັນຜູ້ບໍລິຫານ ຄັງສະສົມແຫ່ງລັດ ໃຫ້ເຕີບໃຫຍ່ເຂັ້ມແຂງ ແລະ ມີສະຖຽນລະພາບ ສາມາດລົງທຶນທາງດ້ານການເງິນ ບໍ່ເກີນ ສີ່ສິບ ສ່ວນຮ້ອຍ (40%) ຂອງຍອດຄັງສະສົມແຫ່ງລັດ.

ມາດຕາ 16 (ປັບປຸງ) ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານງົບປະມານແຫ່ງລັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ ເຕັກໂນໂລຊີ ແລະ ພັດທະນາບຸກຄະລາກອນ, ປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ

# ພາກທີ II
# ໂຄງປະກອບຂອງງົບປະມານແຫ່ງລັດ

ມາດຕາ 17 ໂຄງປະກອບຂອງງົບປະມານແຫ່ງລັດ

ງົບປະມານແຫ່ງລັດ ປະກອບດ້ວຍ:

1. ລາຍຮັບງົບປະມານແຫ່ງລັດ;
2. ລາຍຈ່າຍງົບປະມານແຫ່ງລັດ;
3. ການດຸນດ່ຽງງົບປະມານແຫ່ງລັດ.

## ໝວດທີ 1
## ລາຍຮັບງົບປະມານແຫ່ງລັດ

ມາດຕາ 18 ລາຍຮັບງົບປະມານແຫ່ງລັດ

ລາຍຮັບງົບປະມານແຫ່ງລັດ ມີ ສີ່ແຫຼ່ງ ຄື:

1. ລາຍຮັບຈາກພາສີ ແລະ ສ່ວຍສາອາກອນ;
2. ລາຍຮັບບໍ່ແມ່ນ ພາສີ ແລະ ສ່ວຍສາອາກອນ;
3. ລາຍຮັບຈາກການຊ່ວຍເຫຼືອລ້າ;
4. ລາຍຮັບຈາກການປະກອບສ່ວນຂອງສັງຄົມ.

ມາດຕາ 19 (ປັບປຸງ) ລາຍຮັບຈາກ ພາສີ ແລະ ສ່ວຍສາອາກອນ

ລາຍຮັບຈາກ ພາສີ ແລະ ສ່ວຍສາອາກອນມີ ດັ່ງນີ້:

1. ພາສີຂາອອກ-ຂາເຂົ້າ

2. ອາກອນລາຍໄດ້;
3. ອາກອນມູນຄ່າເພີ່ມ;
4. ອາກອນຊົມໃຊ້;
5. ອາກອນ ທີ່ດິນ;
6. ອາກອນສິ່ງແວດລ້ອມ;
7. ຄ່າທຳນຽມ ແລະ ຄ່າບໍລິການ;
8. ລາຍຮັບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 20 (ປັບປຸງ) ລາຍຮັບບໍ່ແມ່ນ ພາສີ ແລະ ສ່ວຍສາອາກອນ

ລາຍຮັບບໍ່ແມ່ນ ພາສີ ແລະ ສ່ວຍສາອາກອນ ມີ ດັ່ງນີ້:

1. ຄ່າເຊົ່າ ແລະ ຄ່າສຳປະທານ ຊັບສິນຂອງລັດ;
2. ຄ່າຊັບພະຍາກອນທຳມະຊາດ;
3. ການຂາຍ, ການແລກປ່ຽນ, ການທົດແທນ, ການເວນຄືນ, ການມອບ, ໂອນໃຫ້ລັດລ້ຳ ແລະ ຊັບສິນທີ່ບໍ່ມີເຈົ້າຂອງ ຫຼື ມູນມໍລະດົກທີ່ບໍ່ມີສາຍຍາດສືບທອດ;
4. ເງິນປັນຜົນກຳໄລ ແລະ ການຂາຍຮຸ້ນຂອງລັດຖະບານ;
5. ຄ່າ ປັບໃໝ, ການຂາຍຊັບ, ວັດຖຸສິ່ງຂອງ ທີ່ຖືກຮິບ;
6. ລາຍຮັບຈາກການລົງທຶນທາງດ້ານການເງິນ ລວມທັງລາຍຮັບດອກເບ້ຍເງິນໃຫ້ກູ້ຢືມຕໍ່;
7. ລາຍຮັບທີ່ເກີດຂຶ້ນຈາກການນຳໃຊ້ຊັບສິນຂອງລັດ;
8. ລາຍຮັບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 21 (ປັບປຸງ) ລາຍຮັບຈາກການຊ່ວຍເຫຼືອລ້າ

ລາຍຮັບຈາກການຊ່ວຍເຫຼືອລ້າ ແມ່ນໄດ້ຈາກ ລັດຖະບານຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ດ້ວຍຮູບການເປັນເງິນ ຫຼື ເປັນວັດຖຸສິ່ງຂອງ.

ການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບຈາກການຊ່ວຍເຫຼືອລ້າ ຕ້ອງປະຕິບັດຕາມລະບຽບການໃນການໃຊ້ຈ່າຍງົບປະມານແຫ່ງລັດ ແລະ ໃຫ້ຖືກຕ້ອງຕາມເປົ້າໝາຍ.

### ມາດຕາ 22 (ປັບປຸງ) ລາຍຮັບຈາກການປະກອບສ່ວນຂອງສັງຄົມ

ລາຍຮັບຈາກການປະກອບສ່ວນຂອງສັງຄົມ ແມ່ນໄດ້ມາຈາກການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການ ເປັນເງິນ ຫຼື ເປັນວັດຖຸສິ່ງຂອງ.

ການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບຈາກການປະກອບສ່ວນຂອງສັງຄົມ ຕ້ອງປະຕິບັດຕາມລະບຽບການໃນການໃຊ້ຈ່າຍງົບປະມານແຫ່ງລັດ ແລະ ໃຫ້ຖືກຕ້ອງຕາມເປົ້າໝາຍ.

## ໝວດທີ 2

## ລາຍຈ່າຍງົບປະມານແຫ່ງລັດ

### ມາດຕາ 23 (ປັບປຸງ) ປະເພດລາຍຈ່າຍງົບປະມານແຫ່ງລັດ

ການຈັດປະເພດລາຍຈ່າຍງົບປະມານແຫ່ງລັດ ຕາມການຈັດແບ່ງທາງດ້ານເສດຖະກິດ ມີ ດັ່ງນີ້:

1. ລາຍຈ່າຍປົກກະຕິ;
2. ລາຍຈ່າຍການລົງທຶນຂອງລັດ.

### ມາດຕາ 24 (ປັບປຸງ) ລາຍຈ່າຍປົກກະຕິ

ລາຍຈ່າຍປົກກະຕິ ມີ ລາຍຈ່າຍຮັບໃຊ້ກົງຈັກຂອງພັກ-ລັດ ແລະ ລາຍຈ່າຍທາງດ້ານການເງິນອື່ນ ທີ່ລັດຖະບານຮັບຜິດຊອບໂດຍກົງ ຕາມທີ່ໄດ້ກຳນົດໄວ້ໃນສາລະບານບັນຊີ-ງົບປະມານ.

ກ. ລາຍຈ່າຍຮັບໃຊ້ກົງຈັກຂອງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຕົ້ນ:

1. ລາຍຈ່າຍເງິນເດືອນ ແລະ ເງິນອຸດໜູນຕ່າງໆ;
2. ລາຍຈ່າຍບໍລິຫານ;
3. ລາຍຈ່າຍຊື້ສິນຄ້າ ແລະ ການບໍລິການ;
4. ລາຍຈ່າຍຜົນປະໂຫຍດທາງສັງຄົມ;

ຂ. ລາຍຈ່າຍທາງດ້ານການເງິນອື່ນທີ່ລັດຖະບານຮັບຜິດຊອບໂດຍກົງ ເປັນຕົ້ນ:

1. ເງິນພັນທະບຳລຸງໃຫ້ອົງການສາກົນ;
2. ລາຍຈ່າຍດອກເບ້ຍ;
3. ລາຍຈ່າຍເຂົ້າຄັງສະສົມແຫ່ງລັດ;
4. ລາຍຈ່າຍເງິນຊ່ວຍໜູນ;
5. ລາຍຈ່າຍການຊ່ວຍເຫຼືອລ້າ.

ມາດຕາ 25 (ປັບປຸງ) ລາຍຈ່າຍການລົງທຶນຂອງລັດ

ລາຍຈ່າຍການລົງທຶນຂອງລັດ ນຳໃຊ້ເຂົ້າໃນການລົງທຶນເພື່ອ ສາທາລະນະປະໂຫຍດ ແລະ ຜົນກຳໄລ ລວມມີ ແຫຼ່ງທຶນພາຍໃນ, ການກູ້ຢືມ, ການຊ່ວຍເຫຼືອລ້າ ທີ່ຜ່ານລະບົບງົບປະມານ, ເງິນບຳເນັດເກີນແຜນ ແລະ ເງິນປະກອບສ່ວນຈາກນິຕິບຸກຄົນ.

ການລົງທຶນເພື່ອສາທາລະນະປະໂຫຍດ ແມ່ນການນຳໃຊ້ທຶນຈາກງົບປະມານແຫ່ງລັດ ເຂົ້າໃນການ ຊື້ ຫຼື ລົງທຶນ ກໍ່ສ້າງພື້ນຖານໂຄງລ່າງ ທີ່ຮັບໃຊ້ສາທາລະນະປະໂຫຍດ ແລະ ສະໜອງວັດຖຸປະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດ ໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການລົງທຶນເພື່ອຜົນກຳໄລ ແມ່ນການນຳໃຊ້ທຶນຈາກງົບປະມານແຫ່ງລັດ ເຂົ້າໃນການ ຊື້, ລົງທຶນ ຫຼື ເຂົ້າຮຸ້ນນຳວິສາຫະກິດ ແລະ ຊື້ຊັບສິນຄົງທີ່ ທີ່ມີອາຍຸການນຳໃຊ້ເກີນໜຶ່ງປີຂຶ້ນໄປ.

ມາດຕາ 26 ລາຍຈ່າຍງົບປະມານແຫ່ງລັດຕາມຂະແໜງການ, ແຜນງານ ແລະ ໂຄງການ

ນອກຈາກ ການຈັດແບ່ງລາຍຈ່າຍງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້ແລ້ວ ລາຍຈ່າຍງົບປະມານແຫ່ງລັດ ຍັງຈັດແບ່ງຕາມຂະແໜງການ, ແຜນງານ ແລະ ໂຄງການ ດັ່ງນີ້:

1. ການຈັດແບ່ງຕາມຂະແໜງການ: ການສຶກສາ, ສາທາລະນະສຸກ, ເສດຖະກິດ, ວັດທະນະທຳ-ສັງ ຄົມ, ວິທະຍາສາດ, ສິ່ງແວດລ້ອມ, ການປົກຄອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຫວັດດີການສັງຄົມ ແລະ ຂະແໜງການອື່ນ;
2. ການຈັດແບ່ງຕາມແຜນງານ ແລະ ໂຄງການ ແມ່ນ ແຜນງານ ແລະ ໂຄງການທີ່ໄດ້ຮັບຮອງເອົາໃນແຕ່ລະໄລຍະ ເຊັ່ນ ໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ໂຄງການຜະລິດເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ ແລະ ອື່ນໆ.

## ໝວດທີ 3

## ການດຸນດ່ຽງງົບປະມານແຫ່ງລັດ

ມາດຕາ 27 (ປັບປຸງ) ລະບົບການດຸນດ່ຽງງົບປະມານແຫ່ງລັດ

ການດຸນດ່ຽງງົບປະມານແຫ່ງລັດ ແມ່ນການສົມທຽບລະຫວ່າງ ຕົວເລກລວມຍອດລາຍຮັບ ກັບຕົວເລກລວມຍອດລາຍຈ່າຍງົບປະມານແຫ່ງລັດ ໃນໄລຍະໃດໜຶ່ງ ເພື່ອໃຫ້ເຫັນວ່າ ເປັນງົບປະມານ ສົມດຸນ, ເກີນດຸນ ຫຼື ຂາດດຸນ.

ມາດຕາ 28 (ປັບປຸງ) ງົບປະມານ ສົມດຸນ, ເກີນດຸນ ແລະ ຂາດດຸນ

ງົບປະມານສົມດຸນ ແມ່ນ ງົບປະມານທີ່ມີ ຕົວເລກລວມຍອດລາຍຮັບ ເທົ່າກັບ ຕົວເລກ ລວມຍອດລາຍຈ່າຍ.

ງົບປະມານເກີນດຸນ ແມ່ນ ງົບປະມານທີ່ມີ ຕົວເລກລວມຍອດລາຍຮັບ ຫຼາຍກວ່າ ຕົວເລກລວມຍອດລາຍຈ່າຍ ຊຶ່ງງົບປະມານທີ່ເກີນດຸນນັ້ນ ໃຫ້ເພີ່ມເຂົ້າລາຍຈ່າຍໃນວຽກງານທີ່ຈຳເປັນ ຫຼື ມອບເຂົ້າຄັງສະສົມແຫ່ງລັດ.

ງົບປະມານຂາດດຸນ ແມ່ນ ງົບປະມານທີ່ມີ ຕົວເລກລວມຍອດລາຍຮັບ ໜ້ອຍກວ່າ ຕົວເລກລວມຍອດລາຍຈ່າຍ ຊຶ່ງການຂາດດຸນນັ້ນ ໃຫ້ຂາດດຸນສະເພາະງົບປະມານສູນກາງ ເພື່ອນໍາໃຊ້ສະເພາະເຂົ້າໃນການລົງທຶນເທົ່ານັ້ນ ບົນພື້ນຖານຕ້ອງສອດຄ່ອງກັບຄວາມຕ້ອງການ ແລະ ຄວາມອາດສາມາດຂອງແຫຼ່ງທຶນ. ລະດັບການຂາດດຸນ ແລະ ແຫຼ່ງທຶນດຸນດ່ຽງການຂາດດຸນງົບປະມານແຫ່ງລັດ ໃຫ້ລັດຖະບານຄົ້ນຄວ້າ ແລ້ວນໍາສະເໜີຕໍ່ ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງ.

มาดตา 29 (ใໝ່) ແຫຼ່ງທຶນດຸນດ່ຽງງົບປະມານແຫ່ງລັດ

ແຫຼ່ງທຶນດຸນດ່ຽງງົບປະມານແຫ່ງລັດ ມີດັ່ງນີ້:

1. ແຫຼ່ງທຶນພາຍໃນ: ໄດ້ມາຈາກການກູ້ຢືມໂດຍກົງ, ການຂາຍພັນທະບັດ ແລະ ຮູບການອື່ນ;
2. ແຫຼ່ງທຶນຕ່າງປະເທດ: ໄດ້ມາຈາກການກູ້ຢືມໂດຍກົງ, ຄູ່ຮ່ວມພັດທະນາ ສອງຝ່າຍ, ຫຼາຍຝ່າຍ, ການຂາຍພັນທະບັດ ແລະ ຮູບການອື່ນ.

# ພາກທີ III

# ຄວາມຮັບຜິດຊອບ ກ່ຽວກັບ ງົບປະມານແຫ່ງລັດ

## ໝວດທີ 1

## ຄວາມຮັບຜິດຊອບຂອງບັນດາອົງການທີ່ມີການພົວພັນກັບງົບປະມານແຫ່ງລັດ

ມາດຕາ 30 (ປັບປຸງ) ຄວາມຮັບຜິດຊອບຂອງສະພາແຫ່ງຊາດ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ສະພາແຫ່ງຊາດ ມີຄວາມຮັບຜິດຊອບ ຕົ້ນຕໍ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ກົດໝາຍ, ນະໂຍບາຍການເງິນ, ແຜນຍຸດທະສາດການເງິນ, ແຜນງົບປະມານແຫ່ງລັດຫ້າປີ, ແຜນງົບປະມານໄລຍະກາງ ແລະ ປະຈໍາປີ, ການດັດແກ້ແຜນງົບປະມານ ຫ້າປີ ແລະ ປະຈໍາປີ;
2. ພິຈາລະນາ, ຮັບຮອງ ກໍານົດໝາຍຈັດສັນງົບປະມານ, ອັດຕາສ່ວນການຂາດດຸນງົບປະມານ, ແຫຼ່ງດຸນດ່ຽງງົບປະມານ, ການກູ້ຢືມເພື່ອດຸນດ່ຽງງົບປະມານ ແລະ ການຊໍາລະໜີ້ສິນສາທາລະນະ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ ແລະ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈໍາປີ;
3. ພິຈາລະນາ, ຮັບຮອງເອົາ ການກໍານົດ, ການປ່ຽນແປງ, ການຍົກເວັ້ນ, ການຍົກເລີກ, ການລົບລ້າງອັດຕາພາສີ ແລະ ສ່ວຍສາອາກອນ.

ມາດຕາ 31 (ປັບປຸງ) ຄວາມຮັບຜິດຊອບຂອງສະພາປະຊາຊົນຂັ້ນແຂວງ

ໃນວຽກງານງົບປະມານແຫ່ງລັດ ສະພາປະຊາຊົນຂັ້ນແຂວງ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ຂອງທ້ອງຖິ່ນ ແລະ ບົດລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດແຜນດັ່ງກ່າວ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ;
2. ພິຈາລະນາ, ຮັບຮອງເອົາ ແຜນການຈັດເກັບລາຍຮັບ- ລາຍຈ່າຍ ປະຈຳປີ ຂອງທ້ອງຖິ່ນ ຕາມການສະເໜີຂອງ ປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ, ບົນພື້ນຖານເພດານ ທີ່ລັດຖະບານກຳນົດໃຫ້;
3. ພິຈາລະນາ, ຮັບຮອງເອົາ ແຜນການຈັດສັນງົບປະມານແຫ່ງລັດປະຈຳປີ, ເງິນແຮໃຫ້ເມືອງ, ນະຄອນ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ;
4. ພິຈາລະນາ, ຮັບຮອງເອົາ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານຂອງທ້ອງຖິ່ນ;
4. ຊຸກຍູ້ການຕິດຕາມກວດກາສະພາບການຈັດຕັ້ງປະຕິບັດງົບປະມານຂອງບັນດາຂະແໜງການຂັ້ນແຂວງ ແລະ ຂັ້ນເມືອງ.

ມາດຕາ 32 (ປັບປຸງ) ຄວາມຮັບຜິດຊອບຂອງລັດຖະບານ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ລັດຖະບານ ມີຄວາມຮັບຜິດ ຊອບ ດັ່ງນີ້:

1. ຄົ້ນຄວ້າ ແລະ ນຳສະເໜີ ຕໍ່ສະພາແຫ່ງຊາດ ກ່ຽວກັບ ກົດໝາຍ, ນະໂຍບາຍການເງິນ, ແຜນຍຸດທະສາດການເງິນ, ແຜນງົບປະມານແຫ່ງລັດ ຫ້າປີ, ງົບປະມານໄລຍະກາງ, ປະຈຳປີ, ການດັດແກ້ແຜນງົບປະມານແຫ່ງລັດ ຫ້າປີ ແລະ ປະຈຳປີ;
2. ຄົ້ນຄວ້າ ແລະ ນຳສະເໜີ ຕໍ່ສະພາແຫ່ງຊາດ ກ່ຽວກັບ ກຳນົດໝາຍຈັດສັນງົບປະມານ, ອັດຕາສ່ວນການຂາດດຸນງົບປະມານ, ແຫຼ່ງດຸນດ່ຽງງົບປະມານ, ການກູ້ຢືມເພື່ອດຸນດ່ຽງງົບປະມານ ແລະ ການຊຳລະໜີ້ສິນສາທາລະນະ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ ແລະ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳປີ;
3. ຄົ້ນຄວ້າ ແລະ ນຳສະເໜີ ຕໍ່ສະພາແຫ່ງຊາດ ກ່ຽວກັບ, ແຜນການຈັດສັນງົບປະມານການລົງທຶນຂອງລັດ ແລະ ການດັດແກ້ແຜນການລົງທຶນຂອງລັດ ຫ້າປີ ແລະ ປະຈຳປີ;
4. ຄົ້ນຄວ້າ ແລະ ນຳສະເໜີ ຕໍ່ສະພາແຫ່ງຊາດ ກ່ຽວກັບ ການກຳນົດ, ການປ່ຽນແປງ, ການຍົກເວັ້ນ, ການຍົກເລີກ, ການລົບລ້າງອັດຕາ ພາສີ ແລະ ສ່ວຍສາອາກອນ;
5. ອອກດຳລັດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບແຜນງົບປະມານແຫ່ງລັດປະຈຳປີ, ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກວດການການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ;
6. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດນະໂຍບາຍການເງິນ, ແຜນຍຸດທະສາດ ແລະ ແຜນງົບປະມານແຫ່ງລັດ;

7. ລາຍງານສະພາບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ ແລະ ຫ້າປີ ຕໍ່ສະພາແຫ່ງຊາດ;
8. ຊີ້ນຳກະຊວງການເງິນ, ບັນດາອົງການຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ປະຕິບັດລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ໃຫ້ຖືກຕ້ອງຕາມແຜນງົບປະມານ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສັ່ງໂຈະລາຍຈ່າຍ ເມື່ອມີການລະເມີດກົດໝາຍ ກ່ຽວກັບ ການເງິນ;

### ມາດຕາ 33 (ປັບປຸງ) ຄວາມຮັບຜິດຊອບຂອງກະຊວງການເງິນ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ກະຊວງການເງິນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ ແລະ ສ້າງ ກົດໝາຍ, ນະໂຍບາຍການເງິນ, ແຜນຍຸດທະສາດການເງິນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ຫ້າປີ, ໄລຍະກາງ, ປະຈຳປີ, ການດັດແກ້ແຜນງົບປະມານແຫ່ງລັດ ຫ້າປີ ແລະ ປະຈຳປີ ເພື່ອສະເໜີລັດຖະບານ;
2. ຄົ້ນຄວ້າ ແລະ ສ້າງ ກຳນົດໝາຍຈັດສັນງົບປະມານ, ອັດຕາສ່ວນການຂາດດຸນງົບປະມານ, ແຫຼ່ງດຸນດ່ຽງງົບປະມານ, ການກູ້ຢືມເພື່ອດຸນດ່ຽງງົບປະມານ ແລະ ການຊຳລະໜີ້ສິນສາທາລະນະ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ ເພື່ອສະເໜີລັດຖະບານ;
3. ສ້າງລະບຽບການບັນຊີ ປິດບັນຊີງົບປະມານ ແລະ ການເປີດເຜີຍງົບປະມານ;
4. ສັງລວມແຜນງົບປະມານແຫ່ງລັດ, ຄຸ້ມຄອງການຈັດຕັ້ງປະຕິບັດ, ສະເໜີດັດແກ້, ຕີລາຄາສະພາບການຈັດຕັ້ງປະຕິບັດ ແລະ ສ້າງບົດສະຫຼຸບງົບປະມານແຫ່ງລັດ ປະຈຳປີ;
5. ກູ້ຢືມເງິນ ເພື່ອບໍລິຫານສະພາບຄ່ອງທາງດ້ານງົບປະມານ ພາຍໃນປີງົບປະມານ ຕາມການຕົກລົງຂອງລັດຖະບານ;
6. ຄຸ້ມຄອງການເກັບລາຍຮັບງົບປະມານແຫ່ງລັດ ໃຫ້ໄດ້ຕາມແຜນການ ຫຼື ເກີນແຜນການ, ຄຸ້ມຄອງການປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ ຕາມສະພາແຫ່ງຊາດຮັບຮອງ;
7. ເປັນເຈົ້າການໃນການພົວພັນ, ຮ່ວມມືກັບການຈັດຕັ້ງການເງິນຕ່າງປະເທດ, ອົງການການເງິນສາກົນ, ການຈັດຕັ້ງອື່ນ ທີ່ມີສ່ວນພົວພັນວຽກງານການເງິນ, ສ້າງຮ່າງສັນຍາກູ້ຢືມ, ຊ່ວຍເຫຼືອລ້າກັບຕ່າງປະເທດ ແລະ ບັນດາສະຖາບັນການເງິນສາກົນ ເພື່ອນຳສະເໜີລັດຖະບານພິຈາລະນາ;
8. ຄຸ້ມຄອງເງິນກູ້ຢືມ, ເງິນຊ່ວຍເຫຼືອລ້າ ແລະ ປະຕິບັດການຊຳລະໜີ້ສິນຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
9. ຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງ, ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໃນຂອບເຂດທົ່ວປະເທດ, ກວດກາບັນດາຫົວໜ່ວຍວິສາຫະກິດ, ທຸລະກິດທັງພາກລັດ ແລະ ພາກເອກະຊົນ, ຫົວໜ່ວຍງົບປະມານ, ກອງທຶນຂອງລັດ, ຫົວໜ່ວຍບໍລິຫານວິຊາການແຕ່ລະຂັ້ນ ໃນການປະຕິບັດພັນທະເຂົ້າງົບປະມານແຫ່ງລັດ;

10. ຄົ້ນຄວ້າ ອອກນິຕິກຳ ໃນການຈັດຕັ້ງປະຕິບັດກົດໝາຍ, ນະໂຍບາຍການເງິນ, ຍຸດທະສາດການເງິນ ແລະ ແຜນງົບປະມານແຫ່ງລັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
11. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ປະຈຳປີ ຕາມມະຕິຂອງສະພາແຫ່ງຊາດ ແລະ ການມອບໝາຍຂອງລັດຖະບານ;
12. ຄຸ້ມຄອງ ຄັງສະສົມແຫ່ງລັດ, ເງິນແຮລັດຖະບານ, ກອງທຶນຂອງລັດ, ຊັບສິນ, ໜີ້ສິນ ແລະ ວັດຖຸມີຄ່າຂອງລັດ;
13. ຄົ້ນຄວ້າກຳນົດເພດານ ແລະ ແຫຼ່ງທຶນ ສຳລັບແຜນການລົງທຶນຂອງລັດ ຫ້າປີ, ໄລຍະກາງ ແລະ ປະຈຳປີ ທີ່ນຳໃຊ້ແຫຼ່ງທຶນ ພາຍໃນ ແລະ ຕ່າງປະເທດ;
14. ປະສານສົມທົບກັບບັນດາຂະແໜງການຂອງສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ສ້າງຮ່າງແຜນງົບປະມານແຫ່ງລັດ ປະຈຳປີ, ສະເໜີດັດແກ້ແຜນງົບປະມານ ປະຈຳປີ, ສະເໜີນະໂຍບາຍຫຼຸດຜ່ອນອັດຕາພາສີ-ອາກອນ ຕໍ່ລັດຖະບານ;
15. ຊີ້ນຳການສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ໂຄງການລົງທຶນຂອງລັດ ປະຈຳປີ ເພື່ອລາຍງານໃຫ້ ອົງການກວດສອບແຫ່ງລັດ ໃຫ້ທັນຕາມກຳນົດເວລາ.

## ໝວດທີ 2

## ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງກັບງົບປະມານແຫ່ງລັດ

### ມາດຕາ 34 (ປັບປຸງ) ຄວາມຮັບຜິດຊອບຂອງທະນາຄານ ແຫ່ງ ສປປ ລາວ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ທະນາຄານແຫ່ງ ສປປ ລາວ ມີຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້:

1. ບໍລິການບັນຊີເງິນຝາກງົບປະມານແຫ່ງລັດ, ຮັກສາວັດຖຸມີຄ່າຂອງລັດຝາກໄວ້;
2. ສະໜອງທຶນກູ້ຢືມໄລຍະສັ້ນໃຫ້ ກະຊວງການເງິນ ຕາມກົດໝາຍ ວ່າດ້ວຍ ທະນາຄານ ແຫ່ງ ສປປ ລາວ ກຳນົດ;
3. ໃຫ້ຄວາມຮ່ວມມືໃນການບໍລິການຮັບ-ຈ່າຍງົບປະມານແຫ່ງລັດ, ເປີດຈົດໝາຍສິນເຊື່ອ ເພື່ອຈັດຊື້ສິນຄ້າ ແລະ ການບໍລິການຕາມການຕົກລົງຂອງລັດຖະບານ ແລະ ດຳເນີນການຊຳລະໜີ້ສິນກັບຕ່າງປະເທດ ຕາມການສັ່ງມອບ-ສັ່ງຈ່າຍຂອງກະຊວງການເງິນ;
4. ປະສານສົມທົບກັບ ກະຊວງການເງິນ ຂາຍພັນທະບັດຂອງລັດ ຕາມການຕົກລົງຂອງລັດຖະບານ ເພື່ອດຸນດ່ຽງງົບປະມານແຫ່ງລັດ.

### ມາດຕາ 35 (ປັບປຸງ) ຄວາມຮັບຜິດຊອບຂອງກະຊວງ ແລະ ການຈັດຕັ້ງອື່ນ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ກະຊວງ ແລະ ການຈັດຕັ້ງອື່ນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຊີ້ນຳວຽກງານການເງິນຂອງອົງການຕົນ ໃຫ້ປະຕິບັດຕາມກົດໝາຍ ແລະ ວິໄນການເງິນຢ່າງເຂັ້ມງວດໃນການສ້າງແຜນ, ຈັດຕັ້ງປະຕິບັດແຜນ ແລະ ສະຫຼຸບງົບປະມານແຫ່ງລັດ, ຮັບປະກັນການເຄື່ອນໄຫວຂອງກົງຈັກໃຫ້ມີ

ປະສິດທິຜົນ, ປະຢັດ, ຮັບປະກັນຄວາມສະເໝີພາບບົດບາດຍິງ-ຊາຍ, ຖືກຕ້ອງຕາມແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດໄດ້ຮັບຮອງ;

2. ຊີ້ນໍາ, ຄຸ້ມຄອງ ແລະ ກວດກາ ວິສາຫະກິດຂອງລັດ ແລະ ຫົວໜ່ວຍບໍລິຫານວິຊາການ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ປະຕິບັດພັນທະເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນກໍານົດເວລາ ແລະ ການໃຊ້ຈ່າຍໃຫ້ຖືກຕ້ອງຕາມແຜນງົບປະມານແຫ່ງລັດ;
3. ຊີ້ນໍາ, ຄຸ້ມຄອງ ແລະ ກວດກາການເກັບລາຍຮັບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຕາມແຜນການ ແລະ ເກີນແຜນການ; ປະຕິບັດລາຍຈ່າຍ ຕາມແຜນງົບປະມານແຫ່ງລັດ ທີ່ລັດຖະບານມອບໃຫ້, ຮັບປະກັນປະສິດທິຜົນ, ການປະຢັດ ແລະ ຖືກຕ້ອງຕາມກົດໝາຍ;
4. ຊີ້ນໍາຫົວໜ່ວຍງົບປະມານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ຈັດເກັບລາຍຮັບວິຊາການ ໃຫ້ຖືກຕ້ອງຕາມລະບຽບການ ແລະ ມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ;

ມາດຕາ 36 (ປັບປຸງ) ຄວາມຮັບຜິດຊອບຂອງຄະນະກໍາມະການປົກຄອງຂັ້ນແຂວງ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ຄະນະກໍາມະການປົກຄອງຂັ້ນແຂວງ ມີ ຄວາມຮັບຜິດຊອບດັ່ງນີ້:

1. ສ້າງ ແລະ ນໍາພາຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ ແລະ ຫ້າປີ ຂອງຂັ້ນແຂວງ ໃຫ້ສອດຄ່ອງກັບແຜນຍຸດທະສາດ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ສະພາບຈຸດພິເສດ, ທ່າແຮງດ້ານຊັບພະຍາກອນ ແລະ ຄວາມອາດ ສາມາດບົ່ມຊ້ອນຕົວຈິງຂອງຕົນ;
2. ຊີ້ນໍາ ບັນດາພະແນກການ ແລະ ເມືອງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ກ່ຽວກັບ ການສ້າງແຜນ, ຈັດຕັ້ງປະຕິບັດແຜນ ແລະ ສະຫຼຸບແຜນ ງົບປະມານແຫ່ງລັດ ປະຈໍາປີ ແລະ ຫ້າປີ, ຮັບປະກັນການເຄື່ອນໄຫວຂອງກົງຈັກໃຫ້ມີປະສິດທິຜົນ, ປະຢັດ, ຖືກຕ້ອງ ຕາມແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດຮັບຮອງ ຕາມກົດໝາຍ ແລະ ລະບຽບການ;
3. ຄຸ້ມຄອງ, ຊີ້ນໍາ, ອໍານວຍ, ຄວບຄຸມ ໃຫ້ບັນດາອົງການທີ່ກ່ຽວຂ້ອງ ປະຕິບັດການສ້າງລາຍ ຮັບຢູ່ຂັ້ນແຂວງ, ໃຫ້ຖືກຕ້ອງຕາມກົດໝາຍ, ຄົບຖ້ວນ ແລະ ທັນເວລາ;
4. ອໍານວຍຄວາມສະດວກ ແລະ ຕິດຕາມການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ ແລະ ບັນດາໂຄງ ການລົງທຶນ ທີ່ສູນກາງຄຸ້ມຄອງ; ເປັນເຈົ້າການໃນການສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ຢູ່ໃນເຂດປົກຄອງຂອງຕົນ;
5. ຊີ້ນໍາຂະແໜງການທ້ອງຖິ່ນ ເກັບກໍາຖານຂໍ້ມູນລາຍຮັບງົບປະມານແຫ່ງລັດ ໃຫ້ຄົບຖ້ວນ ແລະ ຊັດເຈນ ເພື່ອລາຍງານໃຫ້ຂະແໜງລາຍຮັບທີ່ເປັນສາຍຕັ້ງຂອງ ກະຊວງການເງິນ;

6. ຄຸ້ມຄອງ, ຊີ້ນໍາ, ຕິດຕາມ, ກວດກາ ແລະ ກວດການລາຍຮັບງົບປະມານແຫ່ງລັດ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນຫຼັກການລວມສູນທຸກລາຍຮັບງົບປະມານແຫ່ງລັດ ໃຫ້ຄົບຖ້ວນ, ເອກະພາບ, ຍຸຕິທໍາ, ເປີດເຜີຍ ແລະ ຖືກຕ້ອງຕາມກົດໝາຍ;
7. ຄຸ້ມຄອງ, ຊີ້ນໍາ, ຕິດຕາມ, ກວດກາ ແລະ ກວດການກ່ອນ ແລະ ຫຼັງການປະຕິບັດລາຍຈ່າຍງົບ ປະມານ ໃຫ້ມີປະສິດທິຜົນ, ປະຢັດ, ຖືກຕ້ອງຕາມແຜນງົບປະມານແຫ່ງລັດ ປະຈໍາປີ;
8. ປະສານສົມທົບກັບກະຊວງການເງິນໃນການຄຸ້ມຄອງ, ຊີ້ນໍາ, ຕິດຕາມ, ກວດກາ ແລະ ກວດກາການເກັບລາຍຮັບ ແລະ ການປະຕິບັດລາຍຈ່າຍງົບປະມານແຫ່ງລັດ ຂອງຂັ້ນແຂວງ;
9. ຄຸ້ມຄອງ, ຊີ້ນໍາ, ຕິດຕາມ, ກວດກາ ແລະ ກວດການການປະຕິບັດໜ້າທີ່ຂອງພະນັກງານການເງິນ, ສະເໜີກະຊວງການເງິນ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງພະນັກງານການເງິນຕາມຕໍາແໜ່ງງານ ທີ່ ກະຊວງການເງິນຄຸ້ມຄອງ;
10. ອໍານວຍຄວາມສະດວກ, ຊຸກຍູ້ ແລະ ກວດກາການປະຕິບັດໜ້າທີ່ຂອງພະນັກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງລັດ ຢູ່ທ້ອງຖິ່ນຂອງຕົນ.

ມາດຕາ 37 (ປັບປຸງ) ຄວາມຮັບຜິດຊອບຂອງຄະນະກໍາມະການປົກຄອງຂັ້ນເມືອງ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ຂັ້ນເມືອງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງ ແລະ ນໍາພາຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງຂັ້ນເມືອງ ແລະ ຂັ້ນຕາແສງ ປະຈໍາປີ ແລະ ຫ້າປີ ໃຫ້ສອດຄ່ອງກັບແຜນຍຸດທະສາດ ຂອງຂັ້ນແຂວງ, ສະພາບຈຸດພິເສດ, ທ່າແຮງດ້ານຊັບພະຍາກອນ ແລະ ຄວາມອາດສາມາດບົ່ມຊ້ອນຕົວຈິງ ຂອງຂັ້ນເມືອງ;
2. ຊີ້ນໍາບັນດາຫ້ອງການຂັ້ນເມືອງ ໃນການສ້າງແຜນ, ຈັດແບ່ງແຜນ, ປະຕິບັດແຜນ ແລະ ສະຫຼຸບແຜນງົບປະມານແຫ່ງລັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
3. ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ; ອໍານວຍ, ຄວບຄຸມ ໃຫ້ບັນດາອົງການທີ່ກ່ຽວຂ້ອງ ປະຕິບັດການສ້າງລາຍຮັບຢູ່ຂັ້ນເມືອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ;
4. ປະສານສົມທົບກັບພະແນກການເງິນ ຂັ້ນແຂວງ ໃນການຊີ້ນໍາ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກວດການການເກັບລາຍຮັບ ແລະ ການປະຕິບັດລາຍຈ່າຍງົບປະມານແຫ່ງລັດ ຂອງຂັ້ນເມືອງ;
5. ຊີ້ນໍາ, ຄຸ້ມຄອງ, ຕິດຕາມ ແລະ ກວດກາການປະຕິບັດໜ້າທີ່ຂອງພະນັກງານການເງິນ; ປະສານສົມທົບກັບພະແນກການເງິນຂັ້ນແຂວງ, ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງພະນັກງານການເງິນ ຕາມລະບຽບການ;
6. ຈັດຕັ້ງ, ນໍາພາ, ອໍານວຍ, ຄວບຄຸມ ແລະ ຕິດຕາມກວດກາການເຄື່ອນໄຫວການປະຕິບັດໜ້າທີ່ຂອງບັນດາພະນັກງານການເງິນປະຈໍາແຕ່ລະຫ້ອງການຂັ້ນເມືອງ ແລະ ຕາແສງ;
7. ອໍານວຍຄວາມສະດວກ, ຊຸກຍູ້ ແລະ ກວດກາການປະຕິບັດໜ້າທີ່ຂອງພະນັກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງລັດ ປະຈໍາຂັ້ນເມືອງຂອງຕົນ.

ມາດຕາ 38(ປັບປຸງ) ຄວາມຮັບຜິດຊອບຂອງຫົວໜ່ວຍງົບປະມານແຫ່ງລັດ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ຫົວໜ່ວຍງົບປະມານແຫ່ງລັດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງແຜນງົບປະມານແຫ່ງລັດ ແລະ ຈັດແບ່ງແຜນລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ປະຈຳປີ ພ້ອມທັງມອບຕົວເລກແຜນການດັ່ງກ່າວ ໃຫ້ກົມກອງ ແລະ ຫົວໜ່ວຍງົບປະມານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
2. ໂຄສະນາ ເຜີຍແຜ່ກົດໝາຍ ກ່ຽວກັບ ການເງິນ-ງົບປະມານ, ແນະນຳການຄຸ້ມຄອງການເງິນ, ການຖືບັນຊີ, ການຈົດກ່າຍ ໃຫ້ຖືກຕ້ອງຕາມລະບຽບການບັນຊີ;
3. ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ທີ່ໄດ້ຮັບມອບໝາຍໃຫ້ມີປະສິດທິຜົນ, ເກັບ ແລະ ມອບ ລາຍຮັບໃຫ້ຄົບຖ້ວນ, ທັນກຳນົດເວລາ, ໄລ່ລຽງລາຍຈ່າຍໃຫ້ຖືກຕ້ອງ, ນຳໃຊ້ຖືກເປົ້າໝາຍ, ປະຢັດມັດທະຍັດ ແລະ ຖືກຕ້ອງຕາມກົດໝາຍ;
4. ປະຕິບັດກົດໝາຍ ແລະ ລະບຽບການໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ຕາມແຜນງົບປະມານແຫ່ງລັດ ປະຈຳປີ ໃນການຈັດຊື້ສິນຄ້າ, ການຈັດຈ້າງ ແລະ ການບໍລິການ ດ້ວຍການນຳໃຊ້ງົບປະມານແຫ່ງລັດ;
5. ຈັດຕັ້ງປະຕິບັດວຽກງານບັນຊີ ໃຫ້ຖືກຕ້ອງ ຕາມກົດໝາຍ ວ່າດ້ວຍການບັນຊີ; ແລະ ຕາມສາລະບານບັນຊີ-ງົບປະມານ;
6. ປະສານສົມທົບກັບຄັງເງິນແຫ່ງລັດ ສົມທຽບຕົວເລກການປະຕິບັດລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດ ແລະ ສະຫຼຸບ ລາຍງານການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ທັນກຳນົດເວລາ.

ມາດຕາ 39 (ປັບປຸງ) ຄວາມຮັບຜິດຊອບຂອງຜູ້ປະຕິບັດພັນທະງົບປະມານແຫ່ງລັດ

ໃນການຈັດຕັ້ງປະຕິບັດພັນທະງົບປະມານແຫ່ງລັດ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີຄວາມຮັບຜິດຊອບ ດັ່ງນີ້:

1. ຕ້ອງມອບພັນທະ ພາສີ, ສ່ວຍສາອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ແລະ ພັນທະອື່ນໆ ເຂົ້າງົບປະມານແຫ່ງລັດ ໃຫ້ຄົບຖ້ວນ, ທັນເວລາ ແລະ ຖືກຕ້ອງຕາມກົດໝາຍ;
2. ~~ຖື~~ຈັດຕັ້ງປະຕິບັດວຽກງານບັນຊີຕາມລະບຽບ ແລະ ປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ວ່າດ້ວຍການບັນຊີ, ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ ແລະ ຢູ່ພາຍໃຕ້ການກວດກາຂອງຂະແໜງການການເງິນ ແລະ ອົງການກວດສອບ ພາຍນອກ ຕາມລະບຽບການ;

# ພາກທີ IV

## ການແບ່ງຄວາມຮັບຜິດຊອບ ກ່ຽວກັບງົບປະມານແຫ່ງລັດ

## ໝວດທີ 1

## ການແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ

ມາດຕາ 40 (ປັບປຸງ) ລະບົບງົບປະມານແຫ່ງລັດ

ລະບົບງົບປະມານແຫ່ງລັດ ປະກອບດ້ວຍ ງົບປະມານສູນກາງ ແລະ ງົບປະມານທ້ອງຖິ່ນ ຊຶ່ງແມ່ນ ລະບົບງົບປະມານລວມສູນອັນດຽວ ໃນຂອບເຂດທົ່ວປະເທດ ແລະ ແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງ.

1. ງົບປະມານສູນກາງ ແມ່ນ ງົບປະມານຂອງ ອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ຊຶ່ງປະກອບດ້ວຍ: ຫົວໜ່ວຍງົບປະມານຂັ້ນໜຶ່ງ, ຫົວໜ່ວຍງົບປະມານຂັ້ນສອງ ແລະ ຫົວໜ່ວຍນຳໃຊ້ງົບປະມານ;
2. ງົບປະມານທ້ອງຖິ່ນ ແມ່ນ ງົບປະມານຂອງອົງການປົກຄອງທ້ອງຖິ່ນ, ຂະແໜງການຕ່າງໆ ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ຊຶ່ງປະກອບດ້ວຍ: ຫົວໜ່ວຍງົບປະມານຂັ້ນໜຶ່ງ, ຫົວໜ່ວຍງົບປະມານຂັ້ນສອງ ແລະ ຫົວໜ່ວຍນຳໃຊ້ງົບປະມານ.

ມາດຕາ 41 ການແບ່ງຄວາມຮັບຜິດຊອບ ກ່ຽວກັບ ງົບປະມານແຫ່ງລັດ

ການແບ່ງຄວາມຮັບຜິດຊອບ ກ່ຽວກັບ ງົບປະມານແຫ່ງລັດ ແມ່ນການແບ່ງສິດໃນການຊີ້ນຳ, ການຄຸ້ມຄອງ ແລະ ກົນໄກ ໃນການສ້າງແຜນ, ຈັດຕັ້ງປະຕິບັດແຜນ, ສະຫຼຸບ, ກວດກາ ແລະ ປະເມີນຜົນ ງົບປະມານແຫ່ງລັດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຊັດເຈນ ໂດຍສະເພາະ ຄວາມຮັບຜິດຊອບໃນການຈັດເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ.

ໃນການແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນນັ້ນ ຕ້ອງຮັບປະກັນຫຼັກການ ຂະແໜງການສູນກາງຄຸ້ມຄອງມະຫາພາກ, ອອກນິຕິກຳ, ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ແລະ ຍົກສູງຄວາມຮັບຜິດຊອບ ຂອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດງົບປະມານ ບົນພື້ນຖານຫຼັກການລວມສູນງົບປະມານແຫ່ງລັດ.

ການແບ່ງຄວາມຮັບຜິດຊອບ ກ່ຽວກັບ ງົບປະມານແຫ່ງລັດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຕ້ອງຮັບປະກັນຫຼັກການຄຸ້ມຄອງເປັນເອກະພາບ ໂດຍຂັ້ນສູນກາງ ມີບົດບາດເປັນຜູ້ຄຸ້ມຄອງ ແລະ ດັດສົມລາຍຮັບ-ລາຍຈ່າຍໃນຂອບເຂດທົ່ວປະເທດ, ຊ່ວຍໜູນຂັ້ນແຂວງ ທີ່ຍັງຂາດດຸນ ເພື່ອກ້າວຂຶ້ນເປັນເຈົ້າຕົນເອງເທື່ອລະກ້າວ; ຂັ້ນທ້ອງຖິ່ນ ຕ້ອງເສີມຂະຫຍາຍທ່າແຮງ ແລະ ຄວາມສາມາດບົ່ມຊ້ອນ ເພື່ອຍົກສູງຄວາມສາມາດຂຸດຄົ້ນເກັບລາຍຮັບເພີ່ມຂຶ້ນ, ຄຸ້ມຄອງລາຍຈ່າຍຢ່າງຮັດກຸມ, ສາມາດຕອບສະໜອງຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ.

## ໝວດທີ 2

## ການແບ່ງຂັ້ນຄຸ້ມຄອງ ລາຍຮັບງົບປະມານແຫ່ງລັດ

ມາດຕາ 42 (ປັບປຸງ) ການແບ່ງຂັ້ນຄຸ້ມຄອງ ລາຍຮັບງົບປະມານແຫ່ງລັດ

ການແບ່ງຂັ້ນຄຸ້ມຄອງລາຍຮັບງົບປະມານແຫ່ງລັດ ມີ ດັ່ງນີ້:

1. ລາຍຮັບງົບປະມານແຫ່ງລັດ ທີ່ສູນກາງ ຄຸ້ມຄອງ;
2. ລາຍຮັບງົບປະມານແຫ່ງລັດ ທີ່ທ້ອງຖິ່ນ ຄຸ້ມຄອງ.

ມາດຕາ 43(ປັບປຸງ) ລາຍຮັບງົບປະມານແຫ່ງລັດ ທີ່ສູນກາງຄຸ້ມຄອງ

ລາຍຮັບງົບປະມານແຫ່ງລັດ ທີ່ສູນກາງຄຸ້ມຄອງ ມີ ດັ່ງນີ້:

1. ພາສີ-ອາກອນ ແລະ ຄ່າທຳນຽມ ຂາເຂົ້າ-ຂາອອກ;
2. ອາກອນ, ຄ່າເຊົ່າ ແລະ ຄ່າສຳປະທານຊັບສິນຂອງລັດ, ຄ່າຊັບພະຍາກອນ ທຳມະຊາດ ແລະ ພັນທະອື່ນ ທີ່ຕິດພັນກັບຫົວໜ່ວຍທຸລະກິດຂະໜາດໃຫຍ່, ບໍລິສັດຂ້າມຊາດ, ບໍລິສັດທີ່ນຳໃຊ້ເຕັກໂນໂລຊີລະດັບສູງ ແລະ ວິສາຫະກິດ ທີ່ສູນກາງຄຸ້ມຄອງ ຕາມການຕົກລົງຂອງລັດຖະບານ ໃນແຕ່ລະໄລຍະ;
3. ຄ່າທຳນຽມ ແລະ ຄ່າບໍລິການ, ສະແຕັມອາກອນ ຂອງອົງການລັດ ຂັ້ນສູນກາງ;
4. ຄ່າບິນຜ່ານນ່ານຟ້າ;
5. ການຊ່ວຍເຫຼືອລ້າ ໃຫ້ຂັ້ນສູນກາງ;
6. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ຂັ້ນສູນກາງ;
7. ຄ່າປັບໃໝ, ຂາຍຊັບ, ວັດຖຸສິ່ງຂອງທີ່ຮິບ ທີ່ສູນກາງຄຸ້ມຄອງ;
8. ລາຍຮັບ ຈາກການລົງທຶນທາງດ້ານການເງິນ;
9. ລາຍຮັບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 44 (ປັບປຸງ) ລາຍຮັບງົບປະມານແຫ່ງລັດ ທີ່ທ້ອງຖິ່ນຄຸ້ມຄອງ

ກ. ລາຍຮັບງົບປະມານແຫ່ງລັດ ທີ່ຂັ້ນແຂວງຄຸ້ມຄອງ ມີ ດັ່ງນີ້:

1. ອາກອນ, ຄ່າເຊົ່າ ແລະ ຄ່າສຳປະທານຊັບສິນຂອງລັດ, ຄ່າຊັບພະຍາກອນທຳມະຊາດ ແລະ ພັນທະອື່ນ ທີ່ຕິດພັນກັບຫົວໜ່ວຍທຸລະກິດ ທີ່ຕັ້ງຢູ່ແຂວງ ທີ່ບໍ່ແມ່ນສູນກາງຄຸ້ມຄອງ;
2. ອາກອນລາຍໄດ້ ຈາກທີ່ດິນ;
3. ຄ່າທຳນຽມ ແລະ ຄ່າບໍລິການ, ສະແຕັມອາກອນ ຂອງອົງການລັດ ຂັ້ນແຂວງຄຸ້ມຄອງ;
4. ການຊ່ວຍເຫຼືອລ້າ ໃຫ້ຂັ້ນແຂວງ;
5. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ຂັ້ນແຂວງ;
6. ຄ່າປັບໃໝ, ຂາຍຊັບ, ວັດຖຸສິ່ງຂອງທີ່ຮິບ ຂັ້ນແຂວງຄຸ້ມຄອງ;
7. ລາຍຮັບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຂ. ລາຍຮັບງົບປະມານແຫ່ງລັດ ທີ່ຂັ້ນເມືອງຄຸ້ມຄອງ ມີ ດັ່ງນີ້:

1. ອາກອນ, ຄ່າເຊົ່າ ແລະ ຄ່າສຳປະທານ ຊັບສິນຂອງລັດ, ຄ່າຊັບພະຍາກອນທຳມະຊາດ ແລະ ພັນທະອື່ນ ທີ່ຂັ້ນເມືອງຄຸ້ມຄອງ;

2. ຄ່າທຳນຽມ ແລະ ຄ່າບໍລິການ, ສະແຕັມອາກອນ ທີ່ຂັ້ນເມືອງຄຸ້ມຄອງ;

3. ອາກອນທີ່ດິນ ທີ່ຂັ້ນເມືອງຄຸ້ມຄອງ;

4. ການສຳປະທານຂຸດຄົ້ນ ຫີນແຮ່, ຊາຍ, ດິນດຳ ແລະ ດິນແດງ ທີ່ຂັ້ນເມືອງຄຸ້ມຄອງ;

5. ຄ່າເຊົ່າເຮືອນ, ທີ່ດິນ ແລະ ຊັບສິນອື່ນຂອງລັດ ທີ່ຂັ້ນເມືອງຄຸ້ມຄອງ;

6. ຄ່າປັບໃໝ, ຂາຍຊັບ, ວັດຖຸສິ່ງຂອງທີ່ ຮິບ ທີ່ຂັ້ນເມືອງຄຸ້ມຄອງ;

7. ການຊ່ວຍເຫຼືອລ້າ ໃຫ້ຂັ້ນເມືອງ;

8. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ຂັ້ນເມືອງ;

9. ລາຍຮັບອື່ນ ຕາມການມອບໝາຍຂອງແຂວງ, ນະຄອນຫຼວງ.

## ໝວດທີ 3
## ການແບ່ງຂັ້ນຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ

### ມາດຕາ 45 ການແບ່ງຂັ້ນຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ

ການແບ່ງຂັ້ນຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ ມີ ດັ່ງນີ້:

1. ລາຍຈ່າຍງົບປະມານແຫ່ງລັດຂັ້ນສູນກາງ;
2. ລາຍຈ່າຍງົບປະມານແຫ່ງລັດຂັ້ນທ້ອງຖິ່ນ.

### ມາດຕາ 46 (ປັບປຸງ) ລາຍຈ່າຍງົບປະມານແຫ່ງລັດ ຂັ້ນສູນກາງຄຸ້ມຄອງ

ລາຍຈ່າຍງົບປະມານແຫ່ງລັດ ຂັ້ນສູນກາງຄຸ້ມຄອງ ມີ ດັ່ງນີ້:

1. ວຽກງານກົງຈັກຂອງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ;
2. ການຊຳລະຄອກເບ້ຍເງິນກູ້ຢືມພາຍໃນປະເທດ ແລະ ຕ່າງປະເທດຂອງລັດຖະບານ, ເງິນປະກອບພັນທະໃຫ້ອົງການຈັດຕັ້ງສາກົນ;
3. ກອງທຶນທີ່ນຳໃຊ້ງົບປະມານຂອງລັດ;
4. ເງິນແຮລັດຖະບານ;
5. ຄັງສະສົມແຫ່ງລັດ;
6. ການລົງທຶນຂອງລັດ ທີ່ສູນກາງຄຸ້ມຄອງ;
7. ການລົງທຶນທາງດ້ານການເງິນ;
8. ການຊ່ວຍເຫຼືອລ້າ;
9. ລາຍຈ່າຍອື່ນຕາມກົດໝາຍ.

ມາດຕາ 47 (ປັບປຸງ) ລາຍຈ່າຍງົບປະມານແຫ່ງລັດ ຂັ້ນທ້ອງຖິ່ນຄຸ້ມຄອງ

ກ. ລາຍຈ່າຍງົບປະມານແຫ່ງລັດ ຂັ້ນແຂວງຄຸ້ມຄອງ ມີ ດັ່ງນີ້:

1. ວຽກງານກິງຈັກຂອງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ;
2. ເງິນແຮທ້ອງຖິ່ນ;
2. ການລົງທຶນຂອງລັດ;
3. ການຊ່ວຍເຫຼືອລ້າ;
4. ລາຍຈ່າຍອື່ນຕາມກົດໝາຍ.

ຂ. ລາຍຈ່າຍງົບປະມານແຫ່ງລັດ ຂັ້ນເມືອງຄຸ້ມຄອງ ມີ ດັ່ງນີ້:

1. ວຽກງານກົງຈັກຂອງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນເມືອງ;
2. ເງິນແຮ ທີ່ຂັ້ນແຂວງ ມອບໃຫ້ຄຸ້ມຄອງ;
3. ການລົງທຶນຂອງລັດ;
4. ລາຍຈ່າຍອື່ນຕາມກົດໝາຍ.

## ໝວດທີ 4
## ການຊ່ວຍໜູນງົບປະມານແຫ່ງລັດ

ມາດຕາ 48 ການຊ່ວຍໜູນເພື່ອການດຸນດ່ຽງງົບປະມານແຫ່ງລັດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ

ໃນກໍລະນີລາຍຮັບງົບປະມານແຫ່ງລັດທີ່ທ້ອງຖິ່ນຄຸ້ມຄອງ ຫາກບໍ່ພຽງພໍກັບລາຍຈ່າຍທີ່ ສະພາແຫ່ງຊາດ ຮັບຮອງນັ້ນ ງົບປະມານສູນກາງ ຕ້ອງຊ່ວຍໜູນໃຫ້ງົບປະມານທ້ອງຖິ່ນ ເພື່ອຮັບປະກັນລາຍຈ່າຍປະຈຳປີ.

ໃນກໍລະນີລາຍຮັບງົບປະມານແຫ່ງລັດທີ່ທ້ອງຖິ່ນຄຸ້ມຄອງ ຫາກເກີນດຸນງົບປະມານ ທີ່ສະພາແຫ່ງຊາດ ຮັບຮອງນັ້ນ ງົບປະມານທ້ອງຖິ່ນ ຕ້ອງໂອນສ່ວນທີ່ເກີນນັ້ນ ໃຫ້ງົບປະມານແຫ່ງລັດ ຂັ້ນສູນກາງ.

ມາດຕາ 49 ການຊ່ວຍໜູນເພື່ອດຸນດ່ຽງງົບປະມານແຫ່ງລັດ ລະຫວ່າງ ຂັ້ນແຂວງ ແລະ ຂັ້ນເມືອງ

ໃນກໍລະນີລາຍຮັບງົບປະມານແຫ່ງລັດ ທີ່ຂັ້ນເມືອງຄຸ້ມຄອງ ຫາກບໍ່ພຽງພໍກັບລາຍຈ່າຍທີ່ ສະພາປະຊາຊົນຂັ້ນແຂວງ ຮັບຮອງນັ້ນ ງົບປະມານແຫ່ງລັດຂັ້ນແຂວງ ຕ້ອງຊ່ວຍໜູນງົບປະມານແຫ່ງລັດຂັ້ນເມືອງ ເພື່ອຮັບປະກັນລາຍຈ່າຍປະຈຳປີ.

ໃນກໍລະນີລາຍຮັບງົບປະມານແຫ່ງລັດ ທີ່ຂັ້ນເມືອງຄຸ້ມຄອງ ຫາກເກີນດຸນທີ່ ສະພາປະຊາຊົນຂັ້ນແຂວງ ຮັບຮອງນັ້ນ ງົບປະມານແຫ່ງລັດຂັ້ນເມືອງ ຕ້ອງໂອນສ່ວນທີ່ເກີນນັ້ນ ໃຫ້ງົບປະມານແຫ່ງລັດ ຂັ້ນແຂວງ.

ມາດຕາ 50 (ປັບປຸງ) ການຊ່ວຍໜູນງົບປະມານແຫ່ງລັດ ທີ່ມີເປົ້າໝາຍສະເພາະ

ການຊ່ວຍໜູນງົບປະມານແຫ່ງລັດ ທີ່ມີເປົ້າໝາຍສະເພາະ ແມ່ນການຊ່ວຍໜູນຂອງສູນກາງໃຫ້ທ້ອງຖິ່ນ ເພື່ອເຂົ້າໃນແຜນງານ, ນະໂຍບາຍໃໝ່ ທີ່ລັດຖະບານໄດ້ປະກາດໃຊ້; ຕອບໂຕ້ ແລະ ແກ້ໄຂໄພພິບັດ, ພະຍາດລະບາດຮຸນແຮງ ທີ່ບໍ່ໄດ້ຂຶ້ນແຜນງົບປະມານໄວ້ ແລະ ບັນດາໂຄງການລົງທຶນສຳຄັນລະດັບຊາດ ທີ່ມີຄວາມສຳຄັນທາງດ້ານເສດຖະກິດ-ສັງຄົມ ທີ່ສະພາແຫ່ງຊາດຮັບຮອງ. ການຊ່ວຍໜູນດັ່ງກ່າວ ລັດຖະບານເປັນຜູ້ຕົກລົງ ແລ້ວລາຍງານໃຫ້ ຄະນະປະຈຳສະພາແຫ່ງຊາດຮັບຊາບ.

ມາດຕາ 51 (ປັບປຸງ) ນະໂຍບາຍສົ່ງເສີມການເກັບລາຍຮັບງົບປະມານແຫ່ງລັດ

ນະໂຍບາຍສົ່ງເສີມການເກັບ ແລະ ນຳໃຊ້ລາຍຮັບງົບປະມານແຫ່ງລັດ ຕ້ອງເປັນພື້ນຖານການໄລ່ລຽງຂາດຕົວໃຫ້ປະຕິບັດ ດັ່ງນີ້:

1. ໃນກໍລະນີ ຂັ້ນສູນກາງ ປະຕິບັດລາຍຮັບບໍລິຫານວິຊາການ ເກີນແຜນການ, ສ່ວນທີ່ເກີນນັ້ນ ອະນຸຍາດໃຫ້ນຳໃຊ້ ເພື່ອພັດທະນາອົງການຕົນ ໂດຍເອົາເຂົ້າໃນແຜນງົບປະມານແຫ່ງລັດ ໃນປີຖັດໄປ ຕາມລະບຽບການ;
2. ໃນກໍລະນີ ຂັ້ນແຂວງ ປະຕິບັດລາຍຮັບລວມ ທີ່ຂັ້ນຂອງຕົນຄຸ້ມຄອງໄດ້ເກີນແຜນການ, ສ່ວນທີ່ເກີນນັ້ນ ອະນຸຍາດໃຫ້ນຳໃຊ້ ເພື່ອພັດທະນາແຂວງຂອງຕົນ ໂດຍເອົາເຂົ້າໃນແຜນງົບປະມານແຫ່ງລັດ ໃນປີຖັດໄປ ຕາມລະບຽບການ;
3. ໃນກໍລະນີ ຂັ້ນເມືອງ ປະຕິບັດລາຍຮັບທີ່ຕົນຄຸ້ມຄອງ ໄດ້ເກີນແຜນການ ແລະ ລາຍຮັບລວມຂອງຂັ້ນແຂວງ ກໍເກີນແຜນການ, ສ່ວນທີ່ເກີນນັ້ນ ມອບສິດໃຫ້ຂັ້ນແຂວງ ເປັນຜູ້ພິຈາລະນາ ໃຫ້ຂັ້ນເມືອງ ນຳໃຊ້ ເພື່ອພັດທະນາເມືອງຂອງຕົນ ໂດຍເອົາເຂົ້າໃນແຜນງົບປະມານແຫ່ງລັດ ໃນປີຖັດໄປ ຕາມລະບຽບການ

ລັດຖະບານ ເປັນຜູ້ກຳນົດ ອັດຕາສ່ວນ, ເປົ້າໝາຍ ແລະ ນຳໃຊ້ເງິນເກີນແຜນກ່ອນ ແລ້ວນຳສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ ການດັດແກ້ແຜນງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 62.

ມາດຕາ 52 (ປັບປຸງ) ນະໂຍບາຍສົ່ງເສີມການປະຕິບັດລາຍຈ່າຍໃຫ້ມີປະສິດທິຜົນ

ການປະຕິບັດລາຍຈ່າຍງົບປະມານແຫ່ງລັດປະຈຳປີ ຂອງບັນດາຫົວໜ່ວຍງົບປະມານຂັ້ນ ສູນກາງ ແລະ ທ້ອງຖິ່ນ ທີ່ຜ່ານການປະເມີນແລ້ວຫາກເຫັນວ່າໄດ້ປະຕິບັດຖືກຕ້ອງຕາມແຜນທີ່ ສະພາແຫ່ງຊາດ ຮັບຮອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ນຳໃຊ້ງົບປະມານຂອງຕົນຖືກຕ້ອງຕາມເປົ້າໝາຍ, ໂປ່ງໃສ, ມີປະສິດທິຜົນສູງ ແລະ ໄດ້ຮັບການຢັ້ງຢືນຈາກ ອົງການກວດສອບແຫ່ງລັດ ຈະໄດ້ຮັບນະໂຍບາຍ.

ສຳລັບລາຍລະອຽດຂອງການໃຫ້ ແລະ ນຳໃຊ້ນະໂຍບາຍສົ່ງເສີມການປະຕິບັດລາຍຈ່າຍໃຫ້ມີປະສິດທິຜົນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 53 (ປັບປຸງ) ການແກ້ໄຂ ການເກັບລາຍຮັບ ທີ່ບໍ່ໄດ້ຕາມແຜນ

ພາຍຫຼັງທີ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ ເກີນຫົກເດືອນ ຫາກຄາດຄະເນການເກັບລາຍຮັບບໍ່ໄດ້ຕາມແຜນການປີ ຕໍ່າກວ່າ ຫ້າສ່ວນຮ້ອຍ, ກະຊວງການເງິນ ເປັນເຈົ້າການຄົ້ນຄວ້າ ຫຼຸດລາຍຈ່າຍ ຫຼື ຊອກແຫຼ່ງທຶນ ຕາມຈໍານວນເງິນທີ່ຄາດຄະເນເກັບບໍ່ໄດ້ ເພື່ອສະເໜີລັດຖະບານຕົກລົງ ແລ້ວລາຍງານໃຫ້ ສະພາແຫ່ງຊາດ.

ໃນກໍລະນີທີ່ການເກັບລາຍຮັບ ບໍ່ໄດ້ຕາມແຜນການປະຈໍາປີ ແຕ່ຫ້າສ່ວນຮ້ອຍ ຂຶ້ນໄປ, ກະຊວງການເງິນ ຕ້ອງລາຍງານລັດຖະບານ ເພື່ອນໍາສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ ການດັດແກ້ແຜນງົບປະມານແຫ່ງລັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 61.

# ພາກທີ V

# ການສ້າງ ແລະ ການຮັບຮອງແຜນງົບປະມານແຫ່ງລັດ

## ໝວດທີ 1

## ການສ້າງແຜນງົບປະມານແຫ່ງລັດ

ມາດຕາ 54 ການສ້າງແຜນງົບປະມານແຫ່ງລັດ

ການສ້າງແຜນງົບປະມານແຫ່ງລັດ ໃຫ້ເລີ່ມຈາກການສ້າງ ຫຼື ປັບປຸງ ແຜນງົບປະມານແຫ່ງລັດ ຫ້າປີ, ງົບປະມານໄລຍະກາງ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ.

ການສ້າງແຜນງົບປະມານແຫ່ງລັດ ຫ້າປີ ແມ່ນ ການກໍານົດທິດທາງລວມ ກ່ຽວກັບ ສະພາບການເງິນແຫ່ງລັດ ແລະ ຄາດໝາຍລວມຕົວເລກງົບປະມານແຫ່ງລັດ ໃນໄລຍະ ຫ້າປີ ໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າປີ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ.

ການສ້າງແຜນງົບປະມານແຫ່ງລັດໄລຍະກາງ ແມ່ນ ສ້າງຂຶ້ນບົນພື້ນຖານແຜນງົບປະມານແຫ່ງລັດ ຫ້າປີ ເພື່ອກໍານົດຄາດຄະເນງົບປະມານໃນໄລຍະ ສາມປີ, ຊຶ່ງປະກອບດ້ວຍແຜນງົບປະມານແຫ່ງລັດ ປະຈໍາປີ ທີ່ສະເໜີໃຫ້ ສະພາແຫ່ງຊາດ ພິຈາລະນາຮັບ ຮອງ ແລະ ຂອບງົບປະມານ ສອງປີ ຖັດໄປ ທີ່ຕ້ອງໄດ້ມີການປະເມີນຄືນ ແລະ ປັບປຸງ ໃນແຕ່ລະປີ.

ການສ້າງແຜນງົບປະມານແຫ່ງລັດ ປະຈໍາປີ ໃຫ້ປະຕິບັດ ດັ່ງນີ້:

1. ສ້າງບົນພື້ນຖານ ແຜນງົບປະມານແຫ່ງລັດ ຫ້າປີ, ງົບປະມານໄລຍະກາງ;
2. ໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ;
3. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ດ້ວຍການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງ;
4. ຫົວໜ່ວຍງົບປະມານ ແຕ່ລະຂັ້ນເປັນເຈົ້າການ ສ້າງແຜນງົບປະມານປະຈໍາປີຂອງຕົນ ໂດຍປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ຂະແໜງການທີ່ຄຸ້ມຄອງຕາມສາຍຕັ້ງ ຕ້ອງໄດ້ສັງລວມແຜນງົບປະມານ ຕາມຂະແໜງການຂອງຕົນ ແຕ່ສູນກາງ ຮອດທ້ອງຖິ່ນ.

ມາດຕາ 55 (ປັບປຸງ) ການຈັດສັນງົບປະມານແຫ່ງລັດ

ລັດຖະບານ ຈັດສັນງົບປະມານແຫ່ງລັດປະຈຳປີ ໂດຍອີງຕາມກຳນົດໝາຍການຈັດສັນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດຮັບຮອງ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນວຽກບຸລິມະສິດ ຂອງລັດຖະບານ ແລະ ແຜນງົບປະມານຫ້າປີ ທີ່ສະພາແຫ່ງຊາດຮັບຮອງ ແລະ ແຜນງົບປະມານໄລຍະກາງ ພ້ອມທັງ ກຳນົດເພດານລາຍຈ່າຍໃຫ້ບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ເພື່ອເປັນບ່ອນອີງໃນການສ້າງແຜນງົບປະມານແຫ່ງລັດໃນແຕ່ລະປີ.

ລັດຖະບານ ສ້າງກຳນົດໝາຍການຈັດສັນງົບປະມານແຫ່ງລັດ ໂດຍກຳນົດຕົວຊີ້ວັດທີ່ສອດຄ່ອງໃນແຕ່ລະໄລຍະ.

ມາດຕາ 56 ການສັງລວມແຜນງົບປະມານແຫ່ງລັດ

ກະຊວງການເງິນ ເປັນຜູ້ສັງລວມແຜນລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ຂອງບັນດາການຈັດຕັ້ງລັດ ແລະການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ລວມທັງແຜນດຸນດ່ຽງງົບປະມານແຫ່ງລັດ ແລ້ວລາຍງານລັດຖະບານ ເພື່ອນຳສະເໜີ ຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ.

ມາດຕາ 57 ບັນດາເອກະສານທີ່ລັດຖະບານ ຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ

ເອກະສານທີ່ລັດຖະບານ ຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ ມີ ດັ່ງນີ້:

ກ. ສຳລັບການສະເໜີແຜນງົບປະມານແຫ່ງລັດ ຫ້າປີ:

1. ບົດສະເໜີແຜນງົບປະມານແຫ່ງລັດ ຫ້າປີ ຊຶ່ງລວມມີ ການສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຫ້າປີ ຜ່ານມາ ແລະ ທິດທາງນະໂຍບາຍການເງິນ, ຄາດໝາຍສູ້ຊົນ ແລະແຜນງົບປະມານແຫ່ງລັດ ຫ້າປີ ຖັດໄປ;
2. ຕາຕະລາງ ຮ່າງແຜນງົບປະມານແຫ່ງລັດ ຫ້າປີ;
3. ແຜນຊຳລະຕົ້ນທຶນ ແລະ ດອກເບ້ຍ ຫ້າປີ;
4. ເອກະສານອື່ນທີ່ກ່ຽວຂ້ອງ.

ຂ. ເອກະສານສຳລັບການສະເໜີແຜນງົບປະມານແຫ່ງລັດ ປະຈຳປີ:

1. ບົດສະເໜີແຜນງົບປະມານແຫ່ງລັດ ປະຈຳປີ ຊຶ່ງລວມມີ ການສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດຂາດຕົວງົບປະມານແຫ່ງລັດ ປະຈຳປີຜ່ານມາ, ການລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ, ການກຳນົດນະໂຍບາຍການ ເງິນ, ງົບປະມານໄລຍະກາງ ແລະ ແຜນງົບປະມານແຫ່ງລັດ ປີຖັດໄປ;
2. ຕາຕະລາງ ຮ່າງແຜນງົບປະມານແຫ່ງລັດ ຂອງບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນ ຂັ້ນສູນກາງແລະ ຂັ້ນທ້ອງຖິ່ນ;
3. ບົດລາຍງານສະພາບໜີ້ສິນຂອງລັດ, ແຜນຊຳລະຕົ້ນທຶນ ແລະ ດອກເບ້ຍ ປະຈຳປີ ແລະ ແຜນໄລຍະກາງ;

4. ບັນຊີແຜນງານ ແລະ ໂຄງການລົງທຶນປົກກະຕິຂອງລັດ, ໂຄງການລົງ ທຶນຂອງລັດປະເພດ I, ໂຄງການລົງທຶນຂອງລັດລະດັບຊາດ;
5. ແຜນງານ ແລະ ໂຄງການ ທີ່ມີການຊ່ວຍໜູນງົບປະມານແຫ່ງລັດທີ່ມີເປົ້າໝາຍສະເພາະຂອງສູນກາງ ໃຫ້ຫົວໜ່ວຍງົບປະມານແຫ່ງລັດຢູ່ທ້ອງຖິ່ນ;
6. ເອກະສານອື່ນທີ່ກ່ຽວຂ້ອງ.

ມາດຕາ 58 (ປັບປຸງ) ຂັ້ນຕອນ ແລະ ກໍານົດເວລາ ການສ້າງແຜນງົບປະມານແຫ່ງລັດ

ການສ້າງແຜນງົບປະມານແຫ່ງລັດ ຕ້ອງປະຕິບັດຕາມຂັ້ນຕອນ ແລະ ກໍານົດເວລາ ດັ່ງນີ້:

1. ນາຍົກລັດຖະມົນຕີ ອອກຄໍາສັ່ງ ກ່ຽວກັບ ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ໃນເດືອນມັງກອນ;
2. ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດໍາເນີນການຄາດຄະເນຕົວເລກເສດຖະກິດມະຫາພາກເບື້ອງຕົ້ນ ພາຍໃນເດືອນກຸມພາຂອງປີ ເພື່ອສ້າງແຜນງົບປະມານແຫ່ງລັດ;
3. ກະຊວງການເງິນ ສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງຮ່າງບົດສະເໜີແຜນງົບປະມານແຫ່ງລັດ ຊຶ່ງລວມມີການຄາດຄະເນເພດານແຜນງົບປະມານໄລຍະກາງ ໃຫ້ສໍາເລັດ ພາຍໃນເດືອນມີນາ;
4. ກະຊວງການເງິນ ແຈ້ງເພດານແຜນງົບປະມານໄລຍະກາງ ໃຫ້ບັນດາຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງຕາມຄວາມຮັບຜິດຊອບຂອງຕົນ ພາຍໃນເດືອນເມສາ;
5. ບັນດາຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ຢູ່ສູນກາງ ແລະ ທ້ອງຖິ່ນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ຂະແໜງການເງິນ, ຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າຈັດສັນ ແລະ ແຈ້ງແຜນງົບປະມານໄລຍະກາງ ໃຫ້ບັນດາຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ທີ່ຂຶ້ນກັບຕົນ ພາຍໃນເດືອນພຶດສະພາ;
6. ບັນດາຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ສ້າງແຜນງົບປະມານໄລຍະກາງ ຂອງຕົນ ຕາມສາລະບານບັນຊີ-ງົບປະມານ ແລ້ວສົ່ງໃຫ້ຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ທີ່ຕົນຂຶ້ນກັບ ເພື່ອສັງລວມເປັນແຜນງົບປະມານໄລຍະກາງ ພາຍໃນເດືອນມິຖຸນາ;
7. ບັນດາຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ສັງລວມແຜນງົບປະມານໄລຍະກາງ ຂອງບັນດາຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ທີ່ຂຶ້ນກັບຕົນ ໃຫ້ເປັນແຜນງົບປະມານໄລຍະກາງຂອງຕົນ ສົ່ງໃຫ້ກະຊວງການເງິນ ກ່ອນວັນທີ 30 ກໍລະກົດ;
8. ກະຊວງການເງິນ ສັງລວມ ແລະ ນໍາສະເໜີ ແຜນງົບປະມານແຫ່ງລັດໄລຍະກາງ ແລະ ບົດສະເໜີແຜນງົບປະມານແຫ່ງລັດ ທົ່ວປະເທດ ໃຫ້ລັດຖະບານພິຈາລະນາ ພາຍໃນເດືອນສິງຫາ;

9. ລັດຖະບານ ພິຈາລະນາ ແຜນງົບປະມານແຫ່ງລັດໄລຍະກາງ ແລະ ບົດສະເໜີແຜນງົບປະມານແຫ່ງລັດ ຕາມການສະ ເໜີຂອງ ກະຊວງການເງິນ ແລ້ວລາຍງານຕໍ່ສະພາແຫ່ງຊາດ ຊາວວັນ ກ່ອນວັນເປີດກອງປະຊຸມສະໄໝສາມັນ ປະຈໍາປີ ເທື່ອທີສອງ ຂອງສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງ;
10. ລັດຖະມົນຕີກະຊວງການເງິນ ແຈ້ງແຜນງົບປະມານແຫ່ງລັດປະຈໍາປີ ໃຫ້ຫົວໜ່ວຍງົບປະມານຂັ້ນ ສູນກາງ ແລະ ທ້ອງຖິ່ນ ພາຍໃນເວລາ ສິບຫ້າວັນ ພາຍຫຼັງ ສະພາແຫ່ງຊາດ ຮັບຮອງ.

ສໍາລັບ ຂັ້ນຕອນລະອຽດ ແລະ ກໍານົດເວລາໃນການສ້າງແຜນງົບປະມານແຫ່ງລັດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການຮັບຮອງແຜນງົບປະມານແຫ່ງລັດ

ມາດຕາ 59 (ປັບປຸງ) ການພິຈາລະນາຮັບຮອງແຜນງົບປະມານແຫ່ງລັດ

ກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ ພິຈາລະນາຮັບຮອງເອົາແຜນງົບປະມານແຫ່ງລັດ ຫ້າປີ, ໄລຍະກາງ ແລະ ປະຈໍາປີ ຕາມເນື້ອໃນທີ່ໄດ້ກໍານົດໄວ້ໃນມາດຕາ 57 ຂອງກົດໝາຍສະບັບນີ້.

ມາດຕາ 60 ຂັ້ນຕອນການມອບແຜນງົບປະມານແຫ່ງລັດ

ຂັ້ນຕອນການມອບແຜນງົບປະມານແຫ່ງລັດ ໃຫ້ປະຕິບັດ ດັ່ງນີ້:

1. ລັດຖະບານ ຄົ້ນຄວ້າ ພິຈາລະນາ ແຜນງົບປະມານແຫ່ງລັດ ລະອຽດປະຈໍາປີ ແລະ ອອກດໍາລັດວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ ພາຍໃນເວລາ ສິບຫ້າວັນ ພາຍຫຼັງທີ່ສະພາແຫ່ງຊາດອອກມະຕິຮັບຮອງແຜນງົບປະມານແຫ່ງລັດ ປະຈໍາປີ;
2. ລັດຖະມົນຕີກະຊວງການເງິນ ອອກແຈ້ງການ ແລະ ຄໍາແນະນໍາທາງດ້ານວິຊາການ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ ພາຍໃນເວລາ ສິບຫ້າວັນ ພາຍຫຼັງທີ່ລັດຖະບານ ອອກດໍາລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດປະຈໍາປີ;
3. ບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ມອບແຜນລາຍຮັບ ແລະ ລາຍຈ່າຍງົບປະມານ ໃຫ້ບັນດາກົມ, ຂະແໜງການ ແລະ ຫົວໜ່ວຍຕ່າງໆທີ່ຂຶ້ນກັບຕົນ, ພ້ອມກັນນັ້ນ ກໍແຈ້ງໃຫ້ຂະແໜງການການເງິນ ແລະ ຄັງເງິນແຫ່ງລັດທີ່ຕົນຂຶ້ນກັບ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດລາຍຮັບ ແລະ ລາຍຈ່າຍງົບປະມານ ພາຍໃນເວລາ ສິບຫ້າວັນ ພາຍຫຼັງລັດຖະມົນຕີກະຊວງການເງິນອອກແຈ້ງການ ແລະ ຄໍາແນະນໍາທາງດ້ານວິຊາການ ກ່ຽວກັບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈໍາປີ.

ມາດຕາ 61 (ປັບປຸງ) ການດັດແກ້ແຜນງົບປະມານແຫ່ງລັດ

ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ ສາມາດປະຕິບັດໄດ້ ໃນກໍລະນີ ທີ່ມີລາຍຮັບເກີນ ຫຼື ຫຼຸດແຜນງົບປະມານ, ການປ່ຽນແປງນະໂຍບາຍ ຫຼື ມີເຫດການໃດໜຶ່ງເກີດຂຶ້ນ ທີ່ບໍ່ໄດ້ຄາດຄະເນໄວ້ກ່ອນ ຊຶ່ງເປັນຜົນກະທົບຕໍ່ລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້.

ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ ລັດຖະບານ ສະເໜີຕໍ່ ສະພາແຫ່ງຊາດ ພິຈາລະນາ ການດັດແກ້ແຜນງົບປະມານແຫ່ງລັດ ປະຈຳປີ. ສຳລັບແຜນງົບປະມານແຫ່ງລັດ ຫ້າປີ ລັດຖະບານ ສາມາດສະເໜີຕໍ່ ສະພາແຫ່ງຊາດ ພິຈາລະນາ ດັດແກ້ຕາມສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

## ພາກທີ VI

## ການຈັດຕັ້ງປະຕິບັດ, ການບັນຊີ ແລະ ການສະຫຼຸບລາຍງານງົບປະມານແຫ່ງລັດ

### ໝວດທີ 1

### ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ

ມາດຕາ 62 ການຈັດຕັ້ງເກັບລາຍຮັບ

ການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ ມີ ດັ່ງນີ້:

1. ຂະແໜງການການເງິນ;
2. ບັນດາການຈັດຕັ້ງຂອງລັດ;
3. ບັນດາກອງທຶນຂອງລັດ;
4. ຫົວໜ່ວຍບໍລິຫານວິຊາການ ທີ່ໄດ້ຮັບມອບສິດຈາກລັດຖະບານຕາມການສະເໜີຂອງ ກະຊວງການເງິນ.

ມາດຕາ 63 ຄວາມຮັບຜິດຊອບຂອງການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ

ການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງແຜນເກັບລາຍຮັບ, ເກັບກຳຂໍ້ມູນສະຖິຕິຖານລາຍຮັບໃຫ້ຄົບຖ້ວນ, ຄິດໄລ່ໃຫ້ມີຄວາມຊັດເຈນ ແລະ ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ເປີດເຜີຍ;
2. ເຜີຍແຜ່, ແນະນຳ ກ່ຽວກັບ ບັນດານິຕິກຳຂອງ ຂະແໜງການການເງິນ ໃຫ້ບັນດາເປົ້າໝາຍທີ່ມີໜ້າທີ່ມອບພັນທະເຂົ້າງົບປະມານ, ເພີ່ມທະວີຝຶກອົບຮົມທາງດ້ານວິຊາການ ເພື່ອຍົກລະດັບຄຸນນະພາບຂອງວຽກງານ ແລະ ຫຼຸດຜ່ອນຂັ້ນຕອນໃນການບໍລິຫານ ທີ່ມີຫຼາຍຂອດ;
3. ຈັດຕັ້ງ, ຄຸ້ມຄອງການເກັບລາຍຮັບຈາກພາສີ ແລະ ສ່ວຍສາອາກອນ, ລາຍຮັບບໍ່ແມ່ນພາສີ ແລະ ສ່ວຍສາອາກອນ-ແລະ ລາຍຮັບອື່ນ ໃຫ້ຖືກຕ້ອງຕາມກົດໝາຍ, ຄົບຖ້ວນ, ທັນກຳນົດເວລາ, ເປີດເຜີຍ ແລະ ໂປ່ງໃສ;

4. ເລັ່ງທວງ, ກ່າວເຕືອນ, ປັບໃໝ ເມື່ອພົບເຫັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມອບລາຍຮັບເຂົ້າງົບປະມານ ບໍ່ຄົບຖ້ວນ, ຊັກຊ້າ ໂດຍບໍ່ມີເຫດຜົນພຽງພໍ ແລະ ສະເໜີໃຫ້ດຳເນີນຄະດີ ຕາມຂະບວນການຍຸຕິທຳ ຖ້າຫາກມີ ອົງປະກອບຂອງການກະທຳຜິດ.

ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງການຈັດຕັ້ງເກັບລາຍຮັບ ແມ່ນຢູ່ພາຍໃຕ້ການກວດກາຂອງອົງການ ກວດກາພາຍໃນ, ອົງການກວດກາພາຍນອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 88 ຂອງກົດໝາຍສະບັບນີ້ ແລະ ຄະນະ ສະເພາະກິດ ທີ່ຖືກແຕ່ງຕັ້ງ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ.

### ມາດຕາ 64 (ປັບປຸງ) ການປະຕິບັດລາຍຈ່າຍງົບປະມານແຫ່ງລັດ

ການປະຕິບັດລາຍຈ່າຍງົບປະມານແຫ່ງລັດ ຕ້ອງປະຕິບັດ ດັ່ງນີ້:

1. ຢູ່ໃນແຜນງົບປະມານປະຈຳປີ;
2. ຜ່ານລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນພາກລັດ;
3. ຖືກຕາມເປົ້າໝາຍລາຍຈ່າຍ;
4. ຄິດໄລ່ໃຫ້ຖືກຕ້ອງຕາມກຳນົດໝາຍການໃຊ້ຈ່າຍ;
5. ໄດ້ຮັບອະນຸຍາດຈາກຜູ້ສັ່ງການ ຫຼື ໄດ້ຮັບມອບສິດ.

ໃນກໍລະນີ ທີ່ສະພາແຫ່ງຊາດ ຍັງບໍ່ທັນໄດ້ຮັບຮອງເອົາແຜນງົບປະມານແຫ່ງລັດປະຈຳປີນັ້ນ ລັດຖະບານ ມີສິດ ອະນຸຍາດໃຫ້ຈ່າຍລ່ວງໜ້າໄດ້ເທົ່າກັບ ໜຶ່ງສ່ວນສິບສອງ ຂອງຍອດລາຍຈ່າຍທີ່ປະຕິບັດໃນປີຜ່ານມາ ເພື່ອຈ່າຍເງິນ ເດືອນ, ເງິນນະໂຍບາຍ, ລາຍຈ່າຍບໍລິຫານ ແລະ ລາຍຈ່າຍຊຳລະໜີ້ຕ່າງປະເທດທີ່ຮອດກຳນົດສັນຍາ.

ການເບີກຈ່າຍງົບປະມານແຫ່ງລັດ ຕ້ອງໃຫ້ຖືກ ຕາມລູກຮ່ວງສາລະບານລາຍຈ່າຍທີ່ໄດ້ກຳນົດໃນແຜນການປີ ແລະ ຕາມສາລະບານບັນຊີ-ງົບປະມານ.

ການຈັດຊື້, ການຈັດຈ້າງ, ການບໍລິການ ແລະ ການກໍ່ສ້າງ-ສ້ອມແປງ ດ້ວຍທຶນຂອງລັດ ຕ້ອງຜ່ານຂັ້ນຕອນ, ແລະ ການປະມູນ ແລະ ປະກອບເອກະສານໃຫ້ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການຈ່າຍງົບປະມານປີໃດ ຕ້ອງໄດ້ນຳໃຊ້ແຫຼ່ງລາຍຮັບງົບປະມານປີນັ້ນ ແຕ່ການຊຳລະ ສາມາດດຳເນີນໄປໄດ້ ອີກສາມເດືອນ ພາຍຫຼັງປິດບັນຊີງົບປະມານໃນປີງົບປະມານ ເພື່ອໃຫ້ ຄັງເງິນແຫ່ງລັດ ສາມາດສະຫຼຸບຂາດຕົວ ເປັນແຕ່ ລະປີ.

ການນຳໃຊ້ເງິນງົບປະມານແຫ່ງລັດ ເພື່ອຊຳລະລາຍຈ່າຍ ໃຫ້ປະຕິບັດຕາມຮູບການຕ່າງໆ ເຊັ່ນ: ການໂອນ ບັນຊີ, ການຈ່າຍເປັນເງິນສົດ, ເປັນແຊັກ ແລະ ການເປີດຈົດໝາຍສິນເຊື່ອ.

### ມາດຕາ 65 (ປັບປຸງ) ຄວາມຮັບຜິດຊອບຂອງ ຜູ້ສັ່ງການເອກ

ໃນວຽກງານງົບປະມານແຫ່ງລັດ ຜູ້ສັ່ງການເອກ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ຊີ້ນຳ ການສ້າງ, ຈັດຕັ້ງປະຕິບັດ, ສະຫຼຸບ ແລະ ປະເມີນຜົນແຜນງົບປະມານແຫ່ງລັດປະຈຳປີ;

2. ແຈ້ງແຜນງົບປະມານແຫ່ງລັດປະຈຳປີ ໃຫ້ບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;
3. ຕົກລົງດັດສະເລ່ຍລາຍຈ່າຍງົບປະມານແຫ່ງລັດ ຈາກພາກໜຶ່ງໄປໃສ່ພາກອື່ນ ທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈຳປີ ຂອງຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ;
4. ສັ່ງການໃຫ້ການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ ສູນກາງ ແລະ ທ້ອງຖິ່ນ ແກ້ໄຂ ຫຼື ຍົກເລີກ ເມື່ອກວດກາເຫັນການເກັບລາຍຮັບ ແລະ ການປະຕິບັດລາຍຈ່າຍ ບໍ່ຖືກຕ້ອງຕາມກົດໝາຍ;
5. ອະນຸຍາດໃຫ້ເປີດບັນຊີເງິນຝາກຂອງຫົວໜ່ວຍງົບປະມານ;
6. ສັ່ງໂຈະ ຫຼື ຍົກເລີກການຈັດຊື້-ຈັດຈ້າງດ້ວຍງົບປະມານຂອງລັດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
7. ສັ່ງໂຈະ ຫຼື ຍົກເລີກຂໍ້ຕົກລົງ ກ່ຽວກັບ ງົບປະມານ ຂອງການຈັດຕັ້ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
8. ສັ່ງໂຈະ ຫຼື ລຶບລ້າງ ບັນຊີເງິນຝາກຂອງຫົວໜ່ວຍງົບປະມານທີ່ເປີດບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
9. ສັ່ງມອບລາຍຮັບທີ່ຢູ່ນອກລະບົບ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດ;
10. ອອກຄຳສັ່ງຈ່າຍເງິນ ໃນແຜນງົບປະມານແຫ່ງລັດປະຈຳປີ ຕາມຕົວເລກມອບໝາຍຂອງລັດຖະບານ;
11. ສັ່ງເຄື່ອນຍ້າຍເງິນງົບປະມານໃນລະບົບຄັງເງິນແຫ່ງລັດ ໃນຂອບເຂດທົ່ວປະເທດ;
12. ຕົກລົງສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍງົບປະມານແຫ່ງລັດ ທີ່ຂຶ້ນກັບບັນດາອົງການຈັດຕັ້ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ;
13. ມອບສິດ ໃຫ້ຜູ້ປະຈຳການ ປະຕິບັດໜ້າທີ່ແທນຕົນ ໃນກໍລະນີຈຳເປັນ.

**ມາດຕາ 66 ຄວາມຮັບຜິດຊອບຂອງຜູ້ສັ່ງການ**

ໃນວຽກງານງົບປະມານແຫ່ງລັດ ຜູ້ສັ່ງການ ມີຄວາມຮັບຜິດຊອບ ດັ່ງນີ້:

1. ມີຄວາມຮັບຜິດຊອບໂດຍກົງຕໍ່ ປະສິດທິຜົນໃນການຄຸ້ມຄອງ ແລະ ນຳໃຊ້ງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດຮັບຮອງ;
2. ເປັນເຈົ້າການຊີ້ນຳໃນການສ້າງ, ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ບົນພື້ນຖານການປະຢັດ ແລະ ຕ້ານການຟູມເຟືອຍ;
3. ເກັບລາຍຮັບໃຫ້ຖືກຕ້ອງຕາມກົດໝາຍ, ຄົບຖ້ວນ, ທັນກຳນົດເວລາ, ເປີດເຜີຍ ແລະ ໂປ່ງໃສ, ສະໜອງຂໍ້ມູນ, ສະຖິຕິ ທີ່ຕິດພັນກັບລາຍຮັບງົບປະມານໃຫ້ຂະແໜງການການເງິນ;
4. ຕົກລົງດັດສະເລ່ຍແຜນລາຍຈ່າຍງົບປະມານແຫ່ງລັດ ຈາກລູກຮ່ວງໜຶ່ງໄປໃສ່ລູກຮ່ວງອື່ນໃນພາກດຽວກັນ ທີ່ຢູ່ໃນແຜນງົບປະມານແຫ່ງລັດ ປະຈຳປີ, ຍົກເວັ້ນຮ່ວງລາຍຈ່າຍທີ່ເປັນບຸລິມະສິດ ຂອງລັດຖະບານ;

5. ສູ້ຊົນເກັບລາຍຮັບໃຫ້ໄດ້ຕາມແຜນການ ຫຼື ເກີນແຜນການ;
6. ປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ ໃຫ້ຖືກຕ້ອງຕາມເປົ້າໝາຍລາຍຈ່າຍ, ສາລະບານບັນຊີ-ງົບປະມານ, ລະບຽບການຢ່າງເຂັ້ມງວດ. ສຳລັບການສະເໜີຈ່າຍງົບປະມານ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ;
7. ຮັບຜິດຊອບລົງແຜນງົບປະມານລະອຽດ ໃນລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນພາກລັດ, ການປະກອບເອກະສານ, ການສຳເນົາ, ປະຕິບັດວຽກງານບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ຄິດໄລ່ໃຫ້ຖືກຕ້ອງຕາມກຳນົດໝາຍໃຊ້ຈ່າຍ;
8. ສະຫຼຸບລາຍຮັບ-ລາຍຈ່າຍ ງົບປະມານປະຈຳປີ ຂອງຂະແໜງການຕົນ ສົ່ງໃຫ້ຂະແໜງການການເງິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
9. ຮັບຜິດຊອບຕໍ່ວຽກງານ ກວດກາ ແລະ ຜົນຂອງການກວດສອບງົບປະມານທີ່ຕົນໄດ້ຈັດຕັ້ງປະຕິບັດ;
10. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 67 (ປັບປຸງ) ຄວາມຮັບຜິດຊອບຂອງຄັງເງິນແຫ່ງລັດ

ໃນວຽກງານງົບປະມານແຫ່ງລັດ ຄັງເງິນແຫ່ງລັດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະຕິບັດແຜນງົບປະມານແຫ່ງລັດ, ຄຸ້ມຄອງ, ກວດກາ, ບັນທຶກບັນຊີລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ;
2. ສັງລວມ, ກວດກາ ແລະ ແຍກປະເພດລາຍຮັບງົບປະມານແຫ່ງລັດຈາກລາຍຮັບພາສີ ແລະ ສ່ວຍສາອາກອນ, ລາຍຮັບບໍ່ແມ່ນພາສີ ແລະ ສ່ວຍສາອາກອນ, ລາຍຮັບຈາກການປະກອບສ່ວນຂອງສັງຄົມ ແລະ ລາຍຮັບຈາກການຊ່ວຍເຫຼືອລ້າ ຕາມການແບ່ງຂັ້ນຄຸ້ມຄອງລາຍຮັບສູນກາງ ແລະ ທ້ອງຖິ່ນ;
3. ລວມສູນແຫຼ່ງເງິນຂອງລັດ ໃຫ້ລວມສູນເຂົ້າບັນຊີຄັງເງິນ ຜ່ານລະບົບທະນາຄານ ເພື່ອດັດສົມ ແລະ ບໍລິຫານແຫຼ່ງເງິນໃນລະບົບຄັງເງິນໃຫ້ມີສະພາບຄ່ອງ ເພື່ອຮັບປະກັນ ແລະ ປະຕິບັດລາຍຈ່າຍງົບປະມານ-ຄັງເງິນ ຕາມກົດໝາຍ ແລະ ລະບຽບການ ແລະ ເພື່ອການລົງທຶນດ້ານການເງິນ ຕາມການຕົກລົງຂອງລັດຖະບານ;
4. ກວດກາເອກະສານກ່ອນການເບີກຈ່າຍງົບປະມານແຫ່ງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ, ກອງທຶນຂອງລັດ, ເງິນບໍລິຫານວິຊາການ, ບັນຊີເງິນຝາກ, ເງິນຄ້ຳປະກັນຕາມກົດໝາຍ ແລະ ລະບຽບການ;
5. ຄຸ້ມຄອງຄັງງົບປະມານແຫ່ງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ, ກອງທຶນຂອງລັດ, ເງິນບໍລິຫານວິຊາການ, ບັນຊີເງິນຝາກ, ເງິນຄ້ຳປະກັນ;
6. ເປີດ-ປິດ ບັນຊີເງິນຝາກ, ເງິນຄ້ຳປະກັນຢູ່ຄັງເງິນແຫ່ງລັດ, ບັນຊີທຶນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ຢູ່ທະນາຄານ ແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ ເພື່ອເຄື່ອນໄຫວທຸລະກຳ ດ້ານການເງິນບົນພື້ນຖານບັນຊີລວມສູນຄັງເງິນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 68 (ປັບປຸງ) ການບັນຊີ

ລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດທັງໝົດ ຕ້ອງໄດ້ບັນທຶກເປັນສະກຸນເງິນກີບ ແລະ ຖືກຕ້ອງ ຕາມກົດໝາຍວ່າດ້ວຍການບັນຊີ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ມາດຕາ 69 ການຄຸ້ມຄອງໜີ້ສິນພາຍໃນ ແລະ ຕ່າງປະເທດ

ການຄຸ້ມຄອງໜີ້ສິນພາຍໃນ ແລະ ຕ່າງປະເທດ ມີ ດັ່ງນີ້:

1. ລັດຖະບານ ຄຸ້ມຄອງໜີ້ສິນເປັນແຕ່ລະປີ, ຄວບຄຸມລະດັບໜີ້ສິນ ບົນພື້ນ ຖານການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ, ຖານະການເງິນຂອງປະເທດ ທີ່ສາມາດ ຊໍາລະຕົ້ນທຶນ ແລະ ດອກເບ້ຍ, ແຫຼ່ງທຶນທີ່ຈະມາຊໍາລະໜີ້ສິນ ແລະ ເປົ້າໝາຍການລົງທຶນທີ່ບໍ່ຈໍາເປັນ;
2. ລັດຖະບານ ບໍ່ອະນຸຍາດໃຫ້ບັນດາການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ສ້າງໜີ້ສິນຈາກການຈ່າຍນອກແຜນ ຫຼື ຈ່າຍເກີນແຜນງົບປະມານແຫ່ງລັດ ຕາມມະຕິຂອງ ສະພາແຫ່ງຊາດ;
3. ລັດຖະບານ ສັງລວມ ແລະ ຈັດສັນໜີ້ສິນ ເຂົ້າໃນແຜນງົບປະມານແຫ່ງລັດ ໄລຍະຍາວ, ໄລຍະກາງ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ ເພື່ອຊໍາລະ.

ມາດຕາ 70 (ປັບປຸງ) ການກູ້ຢືມເງິນ

ການກູ້ຢືມເງິນ ມີຂຶ້ນເພື່ອດຸນດ່ຽງງົບປະມານແຫ່ງລັດປະຈໍາປີ.

ວິທີການກູ້ຢືມເງິນ ໃຫ້ປະຕິບັດ ດັ່ງນີ້:

1. ການກູ້ຢືມເງິນຈາກແຫຼ່ງພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ລວມສູນຢູ່ໃນແຜນງົບປະມານແຫ່ງລັດໄລຍະກາງ, ໄລຍະຍາວ ແລະ ແຜນງົບປະມານແຫ່ງລັດປະຈໍາປີ ໂດຍຈົດເຂົ້າໃນລະບົບບັນຊີຄັງເງິນແຫ່ງລັດ;
2. ການກູ້ຢືມເງິນ ຕ້ອງຜ່ານປະຕູດຽວ ຢູ່ກະຊວງການເງິນ ຊຶ່ງເປັນເສນາທິການໃຫ້ລັດຖະບານ ໃນການຄຸ້ມຄອງ ແລະ ນໍາໃຊ້.

ໃນການຄຸ້ມຄອງການກູ້ຢືມເງິນ ກະຊວງການເງິນ ຕ້ອງໄດ້ຄົ້ນຄວ້າຄວາມອາດສາມາດໃຊ້ແທນ ທັງດອກເບ້ຍ ແລະ ຕົ້ນທຶນຄືນ ເພື່ອນໍາສະເໜີລັດຖະບານ.

ມາດຕາ 71 (ປັບປຸງ) ການຊ່ວຍເຫຼືອລ້າ

ການຊ່ວຍເຫຼືອລ້າ ໃຫ້ປະຕິບັດ ດັ່ງນີ້:

1. ລາຍຮັບຊ່ວຍເຫຼືອລ້າທັງໝົດຈາກພາຍໃນ ແລະ ຕ່າງປະເທດ ທີ່ຜູ້ໃຫ້ທຶນມອບເປັນເງິນໂດຍກົງ ຕ້ອງຜ່ານບັນຊີລວມສູນຄັງເງິນ, ສັງລວມເຂົ້າໃນແຜນງົບປະມານແຫ່ງລັດ ແລະ ສາມາດປະຕິບັດໄດ້ເກີນແຜນ ທີ່ສະພາແຫ່ງຊາດ ຮັບຮອງ;

2. ການຊ່ວຍເຫຼືອລ້າຈາກຕ່າງປະເທດທີ່ຕິດພັນກັບໂຄງການ ໃຫ້ ກະຊວງການເງິນ ແລະ ກະຊວງການຕ່າງປະເທດ ເປັນຜູ້ພົວພັນ ແລະ ເຈລະຈາກັບຜູ້ໃຫ້ທຶນ ດ້ວຍການເຂົ້າຮ່ວມຂອງ ການຈັດຕັ້ງຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;
3. ການຊ່ວຍເຫຼືອລ້າຈາກພາຍໃນປະເທດ ອະນຸຍາດໃຫ້ການຈັດຕັ້ງຂອງລັດ, ການຈັດຕັ້ງອື່ນ ທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ພົວພັນ ແລະ ເຈລະຈາໂດຍກົງກັບຜູ້ໃຫ້ທຶນ.

<u>ສຳລັບ ການຊ່ວຍເຫຼືອລ້າເປັນວັດຖຸ, ເປັນໂຄງການ ທີ່ຜູ້ໃຫ້ທຶນ ເປັນຜູ້ປະຕິບັດໂດຍກົງ ບໍ່ຜ່ານບັນຊີລວມສູນຄັງເງິນ ໃຫ້ບັນດາຫົວໜ່ວຍງົບປະມານແຫ່ງລັດ ສະຫຼຸບສັງລວມ ສົ່ງໃຫ້ ກະຊວງການເງິນ ໂດຍບໍ່ໃຫ້ກຳນົດເຂົ້າໃນແຜນງົບປະມານປະຈຳປີ.</u>

ມາດຕາ 72 ການດັດສະເລ່ຍ<u>ແຜນ</u>ລາຍຈ່າຍງົບປະມານແຫ່ງລັດ

ຜ່ານການຈັດຕັ້ງປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ ຫາກເຫັນວ່າບໍ່ສອດຄ່ອງກັບສະພາບ ຄວາມເປັນຈິງ ໃຫ້ດັດສະເລ່ຍ ດັ່ງນີ້:

1. ປ່ຽນລາຍຈ່າຍງົບປະມານແຫ່ງລັດ ຈາກ<u>ລູກ</u>ຮ່ວງໜຶ່ງໄປໃສ່<u>ລູກ</u>ຮ່ວງອື່ນໃນພາກດຽວກັນ ທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈຳປີ ຊຶ່ງຜູ້ສັ່ງການເປັນຜູ້ຕົກລົງ;
2. ລາຍຈ່າຍງົບປະມານແຫ່ງລັດ ຈາກພາກໜຶ່ງໄປໃສ່ພາກອື່ນທີ່ຢູ່ໃນແຜນງົບປະມານແຫ່ງລັດ ປະຈຳປີ ຊຶ່ງຜູ້ສັ່ງການເອກເປັນຜູ້ຕົກລົງ;
3. ລາຍຈ່າຍງົບປະມານແຫ່ງລັດ ຈາກການຈັດຕັ້ງໜຶ່ງໄປໃສ່ການຈັດຕັ້ງອື່ນ,ຈາກທ້ອງຖິ່ນໜຶ່ງ ໄປໃສ່ທ້ອງຖິ່ນອື່ນ ທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈຳປີ ຊຶ່ງນາຍົກລັດຖະມົນຕີເປັນຜູ້ຕົກລົງ ແລ້ວລາຍງານຕໍ່ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

## ໝວດທີ 2
## ການບັນຊີ ແລະ ການສະຫຼຸບລາຍງານງົບປະມານແຫ່ງລັດ

ມາດຕາ 73 (ປັບປຸງ) ການປິດ ແລະ ການສະຫຼຸບ ບັນຊີງົບປະມານແຫ່ງລັດ

ການຈັດຕັ້ງເກັບລາຍຮັບທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້ ແລະ ຫົວໜ່ວຍງົບປະມານທຸກຂັ້ນ ຕ້ອງປິດ ແລະ ສະຫຼຸບບັນຊີຂອງຕົນຕາມກົດໝາຍ.

ມາດຕາ 74 (ປັບປຸງ) ການປິດຮັບເອກະສານ <u>ແຜນ</u>ລາຍຈ່າຍງົບປະມານແຫ່ງລັດ

<u>ຄັງເງິນແຫ່ງລັດ ປິດຮັບເອກະສານສະເໜີເບີກຈ່າຍແຜນງົບປະມານແຫ່ງລັດ ບໍ່ກາຍວັນທີ 20 ທັນວາ ພາຍໃນປີ.</u>

ມາດຕາ 75 ກຳນົດເວລາສັງລວມ ລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ

ການສະຫຼຸບສັງລວມລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ໃຫ້ປະຕິບັດຕາມກຳນົດເວລາ ດັ່ງນີ້:

1. ສະຫຼຸບສັງລວມລາຍຮັບທີ່ເກັບໄດ້ຕົວຈິງໃນປີງົບປະມານຈົນຮອດວັນທີ 31 ທັນວາ;
2. ສະຫຼຸບສັງລວມການເບີກຈ່າຍງົບປະມານແຫ່ງລັດຜ່ານມາ,ໃບຖອນເງິນ, ຄຳສັ່ງຈ່າຍທີ່ຄ້າງ ຈ່າຍຈົນຮອດວັນທີ 31 ທັນວາ ແລະ ດຳເນີນການຊຳລະລາຍຈ່າຍປະຈຳປີ ພາຍໃນ ເກົ້າສິບວັນ ຈົນຮອດວັນທີ 31 ມີນາ;
3. ລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດປີໃດ ຕ້ອງເປີດບັນຊີຕິດຕາມ ແລະ ສະຫຼຸບສະເພາະ ປີນັ້ນ.

ມາດຕາ 76 (ປັບປຸງ) ກຳນົດເວລາລາຍງານສະພາບງົບປະມານ

ການລາຍງານສະພາບງົບປະມານໃຫ້ປະຕິບັດ ດັ່ງນີ້:

1. ພາຍໃນຊາວວັນ ນັບແຕ່ວັນປິດບັນຊີງົບປະມານໃນປີ ຄັງເງິນແຫ່ງລັດ ຕ້ອງສະຫຼຸບສັງລວມ ລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ທີ່ໄດ້ປະຕິບັດຜ່ານມາ, ຍອດເງິນຄ້າງຄັງ, ໜີ້ຕ້ອງສົ່ງຕາມໃບສັ່ງຈ່າຍ ແລ້ວລາຍງານໃຫ້ລັດຖະມົນຕີກະຊວງການເງິນ;
2. ພາຍໃນສິບວັນ ນັບແຕ່ວັນໄດ້ຮັບລາຍງານຈາກຄັງເງິນແຫ່ງລັດ ກະຊວງການເງິນ ຕ້ອງລາຍງານສະພາບການຈັດຕັ້ງປະຕິບັດງົບປະມານແຫ່ງລັດເບື້ອງຕົ້ນ ໃຫ້ລັດຖະບານ ເພື່ອພິຈາລະນາ.

ມາດຕາ 77 (ປັບປຸງ) ການປິດສະຫຼຸບຂາດຕົວງົບປະມານແຫ່ງລັດ

ການປິດສະຫຼຸບຂາດຕົວງົບປະມານແຫ່ງລັດ ກຳນົດເອົາ ວັນທີ 31 ມີນາ. ຄັງເງິນແຫ່ງລັດ ແຕ່ລະຂັ້ນ ຕ້ອງສະຫຼຸບລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດຂາດຕົວ ລະອຽດຕາມຮ່ວງສາລະບານບັນຊີ-ງົບປະມານ ໂດຍປະສານສົມທົບກັບ ຫົວໜ່ວຍງົບປະມານແຕ່ລະຂັ້ນ ເພື່ອລາຍງານໃຫ້ຂັ້ນເທິງຂອງຕົນ.

ມາດຕາ 78 (ປັບປຸງ) ການສັງລວມ ລາຍງານ ສະຫຼຸບຂາດຕົວງົບປະມານແຫ່ງລັດ

ການສັງລວມ ລາຍງານ ສະຫຼຸບຂາດຕົວງົບປະມານແຫ່ງລັດ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ສັ່ງການ ຕ້ອງໄດ້ກວດກາ, ພິຈາລະນາຄວາມຖືກຕ້ອງຂອງບົດສະຫຼຸບ ລາຍງານງົບປະມານແຫ່ງລັດ ແລະ ສົ່ງໃຫ້ກະຊວງການເງິນ ຢ່າງຊ້າບໍ່ໃຫ້ກາຍວັນທີ 30 ເມສາ;
2. ກະຊວງການເງິນ ຕ້ອງສັງລວມການສະຫຼຸບງົບປະມານແຫ່ງລັດປະຈຳປີ ແລ້ວສະເໜີໃຫ້ ລັດຖະບານຄົ້ນຄວ້າ ແລະ ພິຈາລະນາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີ ກ່ອນວັນທີ 30 ມິຖຸນາ;
3. ອົງການກວດສອບແຫ່ງລັດ ຕ້ອງດຳເນີນການກວດສອບ ແລະ ຢັ້ງຢືນຜົນຂອງການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານປະຈຳປີ ໃຫ້ສຳເລັດພາຍໃນເດືອນກັນຍາ;

4. ລັດຖະບານ ສົ່ງບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ ຢ່າງເປັນທາງການ ພາຍຫຼັງຜ່ານການຢັ້ງຢືນຈາກອົງການກວດສອບແຫ່ງລັດ ໃຫ້ສະພາແຫ່ງຊາດ ສິບຫ້າວັນ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ ສະໄໝສາມັນປະຈໍາປີ ເທື່ອທີສອງ.

ມາດຕາ 79 (ປັບປຸງ) ການຮັບຮອງເອົາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ

ສະພາແຫ່ງຊາດພິຈາລະນາຮັບຮອງເອົາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປີຜ່ານມາ. ຖ້າຫາກການຈັດຕັ້ງປະຕິບັດບໍ່ຖືກຕາມແຜນງົບປະມານທີ່ໄດ້ຮັບຮອງເອົາແລ້ວ ສະພາແຫ່ງຊາດມີສິດກວດກາຄືນ ຄວາມຮັບຜິດຊອບຂອງລັດຖະບານ, ຜູ້ສັ່ງການເອກ, ຜູ້ສັ່ງການ ແລະ ຫົວໜ່ວຍງົບປະມານແຕ່ລະຂັ້ນ.

## ພາກທີ VII
## ຂໍ້ຫ້າມ

ມາດຕາ 80 ຂໍ້ຫ້າມ ສໍາລັບຜູ້ສັ່ງການເອກ ແລະ ຜູ້ສັ່ງການ

ຫ້າມ ຜູ້ສັ່ງການເອກ ແລະ ຜູ້ສັ່ງການ ມີ ພຶດຕິກໍາ ດັ່ງນີ້:

1. ສັ່ງຈ່າຍງົບປະມານບໍ່ຖືກຕ້ອງກັບເນື້ອໃນລາຍຈ່າຍທີ່ໄດ້ກໍານົດໄວ້ໃນແຜນການປີ ແລະ ຕາມກົດໝາຍ;
2. ອອກລະບຽບການ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບ ວຽກງານງົບປະມານແຫ່ງລັດ ທີ່ຂັດກັບກົດໝາຍ ເປັນຕົ້ນ ການສ້າງໂຄງການນອກແຜນ, ການຈ່າຍນອກແຜນ, ການຈ່າຍເກີນແຜນ ແລະ ການລົງທຶນກ່ອນ;
3. ມີຫຸ້ນ, ຮຸ້ນ, ຜົນປະໂຫຍດດ້ານການເງິນ ຫຼື ການພົວພັນດ້ານຜົນປະໂຫຍດອື່ນ ຂອງບຸກຄົນ, ສ່ວນຕົວ ທີ່ຕິດພັນກັບຄວາມຮັບຜິດຊອບ ແລະ ສິດ ໃນການຕົກລົງຂອງຕົນ;
4. ແຕ່ງຕັ້ງ ຜົວ ຫຼື ເມຍ ຫຼື ລູກ ຫຼື ຍາດໃກ້ຊິດ ເຂົ້າດໍາລົງຕໍາແໜ່ງ ເປັນນາຍຄັງ, ນາຍບັນຊີ-ການເງິນ ຢູ່ບ່ອນການຈັດຕັ້ງທີ່ຕົນຮັບຜິດຊອບ;
5. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 81 ຂໍ້ຫ້າມ ສໍາລັບພະນັກງານການເງິນ

ຫ້າມ ພະນັກງານການເງິນ ມີ ພຶດຕິກໍາ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ ແລະ ຂໍ້ມູນການເງິນ ທີ່ເປັນຄວາມລັບຂອງ ບຸກຄົນ ແລະ ນິຕິບຸກຄົນ ທີ່ພົວພັນກັບງົບປະມານ;
2. ສວຍໃຊ້ໜ້າທີ່ຕໍາແໜ່ງ, ບັງຄັບນາບຂູ່, ທວງເອົາ, ຂໍເອົາ ຫຼື ຮັບເອົາສິນບົນ ຊຶ່ງກໍ່ໃຫ້ເກີດ ຄວາມເສຍຫາຍຂອງ ບຸກຄົນ, ລວມໝູ່, ລັດ ແລະ ການຈັດຕັ້ງ;

3. ກົດໜ່ວງ ຖ່ວງດຶງ, ປອມແປງ ເອກະສານ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ;
4. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດ ກັບບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດກົດໝາຍ ຊຶ່ງສ້າງຄວາມ ເສຍຫາຍແກ່ຜົນປະໂຫຍດຂອງລັດ;
5. ນຳໃຊ້ເງິນງົບປະມານຂອງລັດ ບໍ່ຖືກຕາມກົດໝາຍ ແລະ ລະບຽບການ ເຊັ່ນ ຝາກເງິນນອກລະບົບ, ນຳໃຊ້ບໍ່ຖືກເປົ້າໝາຍ ຫຼື ຫາລາຍໄດ້ໃນຮູບການອື່ນ;
6. ແນະນຳ ສິ່ງທີ່ຂັດກັບກົດໝາຍ ແລະ ລະບຽບການ, ໃຊ້ວາຈາ ແລະ ສະແດງທ່າທີບໍ່ສຸພາບ ຕໍ່ຜູ້ໃຊ້ບໍລິການ;
7. ແຕ່ງຕັ້ງ ຜົວ ຫຼື ເມຍ ຫຼື ລູກ ຫຼື ຍາດໃກ້ຊິດ ເຂົ້າດຳລົງຕຳແໜ່ງ ເປັນນາຍຄັງ, ນາຍບັນຊີ-ການເງິນ ຢູ່ບ່ອນການຈັດຕັ້ງທີ່ຕົນຮັບຜິດຊອບ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 82 (ປັບປຸງ) ຫ້າມ ສຳລັບຫົວໜ່ວຍງົບປະມານ

ຫ້າມ ຫົວໜ່ວຍງົບປະມານ ມີ ພຶດຕິກຳ ດັ່ງນີ້:

1. ປົກປິດລາຍຮັບ ທີ່ຕົນຄຸ້ມຄອງ, ເກັບລາຍຮັບງົບປະມານແຫ່ງລັດທີ່ບໍ່ຖືກຕ້ອງຕາມລະບຽບການ ແລະ ບໍ່ມອບເຂົ້າງົບປະມານແຫ່ງລັດ ຢ່າງຄົບຖ້ວນ;
2. ເປີດບັນຊີຂອງຫົວໜ່ວຍງົບປະມານຕົນ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ສັ່ງການເອກ ຫຼື ຜູ້ຖືກມອບສິດ;
3. ຈ່າຍງົບປະມານບໍ່ຖືກຮ່ວງຕາມສາລະບານ, ຄິດໄລ່ບໍ່ຖືກຕ້ອງຕາມກຳນົດໝາຍໃຊ້ຈ່າຍ ແລະ ນຳໃຊ້ງົບປະມານບໍ່ຖືກເປົ້າໝາຍ;
4. ດຳເນີນການປະມູນ, ຈັດຊື້-ຈັດຈ້າງ ດ້ວຍງົບປະມານຂອງລັດ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
5. ນຳໃຊ້ງົບປະມານ <u>ທີ່ບໍ່ຢູ່ໃນແຜນທີ່ສະພາແຫ່ງຊາດຮັບຮອງ;</u>
6. ສ້າງ ແລະ ສະຫຼຸບ ແຜນງົບປະມານແຫ່ງລັດ ບໍ່ທັນຕາມກຳນົດເວລາທີ່ກົດໝາຍໄດ້ກຳນົດໄວ້;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VIII

## ການຄຸ້ມຄອງ ແລະ ກວດກາ ວຽກງານງົບປະມານແຫ່ງລັດ

### ໝວດທີ 1

### ການຄຸ້ມຄອງວຽກງານງົບປະມານແຫ່ງລັດ

ມາດຕາ 83 (ປັບປຸງ) ອົງການຄຸ້ມຄອງວຽກງານງົບປະມານແຫ່ງລັດ

ລັດຖະບານ ຄຸ້ມຄອງວຽກງານງົບປະມານແຫ່ງລັດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານງົບປະມານແຫ່ງລັດ ປະກອບດ້ວຍ:

1. ກະຊວງການເງິນ;
2. ພະແນກການເງິນ ນະຄອນຫຼວງ, ແຂວງ;
3. ຫ້ອງການການເງິນເມືອງ, ນະຄອນ.

ມາດຕາ 84 ສິດ ແລະ ໜ້າທີ່ຂອງກະຊວງການເງິນ

ໃນການຄຸ້ມຄອງວຽກງານງົບປະມານແຫ່ງລັດ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງນະໂຍບາຍການເງິນ, ແຜນຍຸດທະສາດໄລຍະກາງ ແລະ ໄລຍະຍາວ, ເພື່ອສະເໜີລັດຖະ ບານພິຈາລະນາ;
2. ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ນິຕິກຳອື່ນໃນຂົງເຂດການເງິນ, ງົບປະມານ, ເພື່ອສະເໜີ ລັດຖະບານພິຈາລະນາ;
3. ໂຄສະນາ ເຜີຍແຜ່ນະໂຍບາຍການເງິນ, ແຜນຍຸດທະສາດ, ແຜນງົບປະມານ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບ ຂະແໜງການການເງິນ ໃຫ້ພາກສ່ວນທີ່ກ່ຽວຂ້ອງຢ່າງທົ່ວເຖິງ;
4. ຄຸ້ມຄອງດ້ານວິຊາການຕໍ່ວຽກງານງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ ລວມທັງ ພະນັກງານການເງິນຂອງທຸກຂັ້ນ ແລະ ທຸກຂະແໜງການ;
5. ຄຸ້ມຄອງບໍລິຫານ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ ຂອງທຸກຂັ້ນ;
6. ຊີ້ນຳ, ນຳພາ, ອຳນວຍຄວບຄຸມ ແລະ ຕິດຕາມການປະຕິບັດໜ້າທີ່ວຽກງານການເງິນ ຂອງຂະແໜງການອື່ນ ແລະ ຂະແໜງການການເງິນ ທຸກຂັ້ນ;
7. ຊີ້ນຳວຽກງານວິຊາສະເພາະ, ຄຸ້ມຄອງ ແລະ ສ້າງບຸກຄະລາກອນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານໃນຂະແໜງການການເງິນ;
8. ສ້າງແຜນຍຸດທະສາດພັດທະນາບຸກຄະລາກອນຂອງຂະແໜງການການເງິນ;
9. ພົວພັນ, ຮ່ວມມື ວຽກງານງົບປະມານແຫ່ງລັດ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ;

10. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ ຕໍ່ລັດຖະບານ ຢ່າງເປັນ ປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 85 ສິດ ແລະ ໜ້າທີ່ ຂອງພະແນກການເງິນ ນະຄອນຫຼວງ, ແຂວງ

ໃນການຄຸ້ມຄອງວຽກງານງົບປະມານແຫ່ງລັດ ພະແນກການເງິນ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍການເງິນ-ງົບປະມານແຫ່ງລັດ, ແຜນຍຸດທະສາດໄລຍະກາງ ແລະ ໄລຍະຍາວ ແລະ ຈັດຕັ້ງປະຕິບັດ;
2. ປະກອບຄໍາເຫັນຕໍ່ຮ່າງກົດໝາຍ ແລະ ຮ່າງນິຕິກໍາອື່ນໃນຂົງເຂດການເງິນ, ງົບປະມານ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍການເງິນ, ແຜນຍຸດທະສາດ, ແຜນງົບປະມານ, ກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບວຽກງານງົບປະມານຢ່າງທົ່ວເຖິງ;
4. ຄຸ້ມຄອງດ້ານວິຊາການຕໍ່ ວຽກງານງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ ລວມທັງ ພະນັກງານການເງິນ;
5. ຄຸ້ມຄອງບໍລິຫານ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ;
6. ຊີ້ນໍາ, ນໍາພາ, ອໍານວຍຄວບຄຸມ ແລະ ຕິດຕາມການປະຕິບັດໜ້າທີ່ວຽກງານການເງິນຂອງ ຂະແໜງການອື່ນ ແລະ ຂະແໜງການການເງິນ;
7. ຊີ້ນໍາວຽກງານວິຊາສະເພາະ, ຄຸ້ມຄອງ ແລະ ສະເໜີ ສ້າງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ບຸກຄະລາກອນ, ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານ;
8. ສ້າງແຜນຍຸດທະສາດພັດທະນາບຸກຄະລາກອນຂອງຂະແໜງການການເງິນ;
9. ພົວພັນ, ຮ່ວມມື ວຽກງານງົບປະມານແຫ່ງລັດ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການມອບໝາຍ;
10. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ ຕໍ່ອົງການປົກຄອງຂັ້ນແຂວງ ແລະ ກະຊວງການເງິນ ຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

### ມາດຕາ 86 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການການເງິນ ເມືອງ, ນະຄອນ

ໃນການຄຸ້ມຄອງວຽກງານງົບປະມານແຫ່ງລັດ ຫ້ອງການການເງິນ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍການເງິນ-ງົບປະມານແຫ່ງລັດ, ແຜນຍຸດທະສາດໄລຍະກາງ ແລະ ໄລຍະຍາວ;
2. ປະກອບຄໍາເຫັນຕໍ່ຮ່າງກົດໝາຍ ແລະ ຮ່າງນິຕິກໍາອື່ນ ໃນຂົງເຂດການເງິນ, ງົບປະມານ;
3. ເຜີຍແຜ່ ນະໂຍບາຍການເງິນ, ແຜນຍຸດທະສາດ, ແຜນງົບປະມານ, ກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບວຽກງານງົບປະມານຢ່າງທົ່ວເຖິງ;

4. ຄຸ້ມຄອງດ້ານວິຊາການຕໍ່ ວຽກງານງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ ລວມທັງ ພະນັກງານການເງິນ;
5. ຄຸ້ມຄອງບໍລິຫານ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ;
6. ຊີ້ນໍາ, ນໍາພາ, ອໍານວຍຄວບຄຸມ ແລະ ຕິດຕາມການປະຕິບັດໜ້າທີ່ວຽກງານການເງິນ;
7. ຊີ້ນໍາວຽກງານວິຊາສະເພາະ, ຄຸ້ມຄອງ ແລະ ສະເໜີ ສ້າງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ບຸກຄະລາກອນ, ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານ;
8. ສະເໜີແຜນການພັດທະນາບຸກຄະລາກອນ;
9. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ ຕໍ່ອົງການປົກຄອງຂັ້ນ ເມືອງ ແລະ ພະແນກການເງິນຂັ້ນແຂວງ ຢ່າງເປັນປົກກະຕິ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

ມາດຕາ 87 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ

ໃນການຄຸ້ມຄອງວຽກງານງົບປະມານແຫ່ງລັດ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການການເງິນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ.

## ໝວດທີ 2

## ການກວດກາວຽກງານງົບປະມານແຫ່ງລັດ

ມາດຕາ 88 (ປັບປຸງ) ອົງການກວດກາວຽກງານງົບປະມານແຫ່ງລັດ

ອົງການກວດກາວຽກງານງົບປະມານແຫ່ງລັດ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານງົບປະມານແຫ່ງລັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 81 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ-ມີ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

ມາດຕາ 89 (ປັບປຸງ) ເນື້ອໃນການກວດກາ

ການກວດກາວຽກງານງົບປະມານແຫ່ງລັດ ມີ ເນື້ອໃນ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບ ການເງິນ-ງົບປະມານ, ກວດກາການເກັບລາຍຮັບ, ການປະຕິບັດລາຍຈ່າຍ ຕາມແຜນງົບປະມານແຫ່ງລັດ;

2. ກວດກາການນຳໃຊ້ສິດ ແລະ ຄວາມຮັບຜິດຊອບຂອງຜູ້ສັ່ງການເອກ, ຜູ້ສັ່ງການ, ຄັງເງິນແຫ່ງຊາດ, ຫົວໜ່ວຍງົບປະມານຂັ້ນຕ່າງໆ ແລະ ຂະແໜງການຄຸ້ມຄອງວຽກງານງົບປະມານ ກ່ຽວກັບການຈັດຕັ້ງ ປະຕິບັດງົບປະມານແຫ່ງລັດ;
3. ກວດກາຄວາມຮັບຜິດຊອບຂອງການຈັດຕັ້ງເກັບລາຍຮັບ ແລະ ອົງການຄຸ້ມຄອງງົບປະມານແຫ່ງລັດ ຕາມກົດໝາຍ;
4. <u>ເນື້ອໃນອື່ນທີ່ເຫັນວ່າມີຄວາມຈຳເປັນ.</u>

### ມາດຕາ 90 ຮູບການ ການກວດກາ

ການກວດກາວຽກງານງົບປະມານແຫ່ງລັດ ປະກອບດ້ວຍສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບ ລ່ວງໜ້າ.

ໃນການດຳເນີນການກວດການັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

### <u>ມາດຕາ 91 (ໃໝ່) ການແກ້ໄຂຜົນການກວດສອບ</u>

<u>ຫົວໜ່ວຍງົບປະມານແຫ່ງລັດ ທີ່ລະເມີດກົດໝາຍ ແລະ ລະບຽບການ ຕ້ອງດຳເນີນການແກ້ໄຂຜົນການກວດສອບ ຕາມກົດໝາຍວ່າດ້ວຍການກວດສອບແຫ່ງລັດ.</u>

<u>ອົງການກວດສອບແຫ່ງລັດ ພາຍຫຼັງດຳເນີນການກວດສອບຫົວໜ່ວຍງົບປະມານແລ້ວ ຕ້ອງສັງລວມລາຍລະອຽດ, ລາຍງານ ແລະ ເອກະພາບ ກັບ ກະຊວງການເງິນ ກ່ອນນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ.</u>

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 92 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ການຈັດຕັ້ງເກັບລາຍຮັບ, ຫົວໜ່ວຍງົບປະມານ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ ເປັນຕົ້ນ ຄຸ້ມຄອງການເກັບລາຍຮັບຢ່າງຖືກຕ້ອງ, ຄົບຖ້ວນ, ທັນກຳນົດເວລາ, ໄດ້ຕາມແຜນການ ຫຼື ເກີນແຜນການ, ຄຸ້ມຄອງລາຍຈ່າຍຖືກຕ້ອງ ຢ່າງເປີດເຜີຍ, ໂປ່ງໃສ, ປະຢັດ ແລະ ມີປະສິດທິຜົນຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ມອບພັນທະເຂົ້າງົບປະມານແຫ່ງລັດ ຢ່າງຖືກຕ້ອງ, ຄົບຖ້ວນ, ທັນກຳນົດເວລາ, ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ ກ່ຽວກັບການລະເມີດກົດໝາຍ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຢ່າງເໝາະສົມ.

<u>ມາດຕາ 93 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ</u>

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ກົດໝາຍສະບັບນີ້ <u>ຈະຖືກ</u>ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ໃຊ້ແທນຄ່າເສຍຫາຍ<u>ທາງແພ່ງ</u>ທີ່ຕົນໄດ້ກໍ່ຂຶ້ນ <u>ຫຼື ຖືກລົງໂທດ</u>ທາງອາຍາ ຕາມກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

ມາດຕາ 94 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

ມາດຕາ 95 (ປັບປຸງ) ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ <u>ສະບັບເລກທີ 71/ສພຊ ລົງວັນທີ 16 ທັນວາ 2015 ແລະ ສະບັບເລກທີ 13/ສພຊ ລົງວັນທີ 17 ພະຈິກ 2021.</u>

ປະທານສະພາແຫ່ງຊາດ